ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

08-14 ກຸມພາ 2025
ປີທີ 14
ສະບັບທີ 1005
ລາຍສັບປະດາ

## ຜົນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ຄັ້ງທີ II ປະຈຳປີ 2024



(ສພຊ) - ໂດຍປະຕິບັດຕາມແຜນດຳເນີນງານຮ່ວມ ກໍຄືກົນໄກການປະສານງານ ແລະ ການປຶກສາຫາລືຮ່ວມລະຫວ່າງສະພາແຫ່ງຊາດແລະລັດຖະບານທີ່ດຳເນີນມາເປັນປົກກະຕິ, ໃນວັນທີ 14 ກຸມພາ 2025 ທີ່ຫໍ

ອ່ານຕໍ່ໜ້າ 3

## ກອງປະຊຸມຄະນະບໍລິຫານງານພັກ ສະພາແຫ່ງຊາດ ເປີດກວ້າງ ປະຈຳປີ 2024

(ສພຊ) - ກອງປະຊຸມຄະນະບໍລິຫານງານພັກສະພາແຫ່ງຊາດ (ສພຊ) ເປີດກວ້າງ ປະຈຳປີ 2024 ໄດ້ຈັດໃນວັນທີ 12 ກຸມພານີ້ ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ; ມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກເລຂາທິການສູນກາງ

ອ່ານຕໍ່ໜ້າ 6



## ຄະນະບໍລິຫານງານພັກ ສພຊ ດຳເນີນກອງປະຊຸມເປີດກວ້າງ ປະຈຳປີ 2024

(ສພຊ) - ໃນໄລຍະແຕ່ວັນທີ 12-13 ກຸມພາຜ່ານມາ, ຄະນະບໍລິຫານງານພັກສະພາແຫ່ງຊາດ (ສພຊ) ໄດ້ຈັດກອງປະຊຸມເປີດກວ້າງປະຈຳປີ 2024 ໂດຍການເປັນປະທານຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ. ໃນກອງປະຊຸມດັ່ງກ່າວ, ໄດ້ມີສະຫາຍ ນາງ ອຳໄພວອນ ລ້ອມບຸນແພງກຳມະການສຳຮອງສູນກາງພັກ ໄດ້ຕາງໜ້າໃຫ້ຄະນະບໍລິຫານງານພັກສະພາແຫ່ງຊາດ ຂຶ້ນລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະບໍລິຫານງານພັກສະພາແຫ່ງຊາດໃນປີ 2024 ແລະ ວາງທິດທາງແຜນການໃນປີ 2025 ໂດຍໄດ້ມີການປະກອບຄຳເຫັນຈາກບັນດາສະຫາຍໃນຄະນະບໍລິຫານງານພັກ, ການນຳຂັ້ນຕ່າງໆຂອງ

ອ່ານຕໍ່ໜ້າ 11

## ປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂໍ່ານັບຂອງປະທານສຳນັກງານກວດສອບແຫ່ງຊາດມົງໂກລີ



(ສພຊ) - ຕອນບ່າຍວັນອັງຄານທີ 11 ກຸມພາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຊັກຈາວ ເຕເລັກ ປະທານສຳນັກງານກວດສອບແຫ່ງຊາດມົງໂກລີພ້ອມດ້ວຍຄະນະ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ພົບປະກັບທ່ານ ຊັກຈາວ ເຕເລັກ ພ້ອມດ້ວຍຄະ

ອ່ານຕໍ່ໜ້າ 3

## ພິທີມອບ-ຮັບຮູບແຕ້ມການນຳ ສພຊ



(ສພຊ) - ຕອນເຊົ້າວັນທີ 11 ກຸມພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບຮູບການນຳສະພາແຫ່ງຊາດແຕ່ລະສະໄໝທີ່ແຕ້ມດ້ວຍເມັດເຂົ້າສານ ເພື່ອຈັດວາງໃສ່ຫ້ອງມູນເຊື້ອສະພາແຫ່ງຊາດ ໂດຍການກ່າວຮັບຂອງທ່ານປອ. ນາງ ສູນທອນ ໄຊຍະຈັກຮອງປະທານສະພາແຫ່ງຊາດ ແລະ ຕາງໜ້າມອບແມ່ນທ່ານ Dong Hoang Hien ຜູ້ອຳນວຍການ ບໍລິສັດ Binh Dien Quang Tri Joint Stock Company; ໂດຍມີທ່ານເລຂາທິການສະພາແຫ່ງຊາດ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກໄດ້ສະແດງຄວາມຂອບໃຈພ້ອມທັງມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ເພື່ອຍ້ອງຍໍຜົນງານດີເດັ່ນໃນການປະກອບສ່ວນຊຸກຍູ້ ແລະ ອຸປະຖຳຄັ້ງນີ້.

(ນາງ ກຸກກິກ ບຸດດາໄຊ)

## ຮຽບຮຽງ ແລະ ກວດກາເນື້ອໃນຮອບດ້ານຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025



(ສພຊ) - ເພື່ອເຮັດໃຫ້ເນື້ອໃນຂອງຮ່າງລັດຖະທຳມະນູນສະບັບປັບປຸງ ມີເນື້ອໃນຄົບຖ້ວນ ແລະ ຮັດກຸມ, ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ (ຄລຊ) ໄດ້ຄົ້ນຄວ້າ, ຮຽບຮຽງ ແລະ ກວດກາເນື້ອໃນຮອບດ້ານຮ່າງລັດຖະທຳມະນູນສະບັບປັບປຸງຕາມຄຳເຫັນຂອງກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນຢູ່ 7 ຈຸດໃນຂອບເຂດທົ່ວປະເທດ; ໃນລະຫວ່າງວັນທີ 7-8 ກຸມພາ 2025 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມຮຽບຮຽງ ແລະ ກວດກາເນື້ອໃນຮອບດ້ານຮ່າງລັດຖະທຳມະນູນສະບັບປັງປຸງປີ 2025 ໂດຍການເປັນປະທານຂອງທ່ານສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານ ຜູ້ປະຈຳການຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ, ເຂົ້າຮ່ວມມີບັນດາທ່ານຄະນະກຳມະການ ແລະ ກອງເລຂາ ຄລຊ.

ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງລັດຖະທຳມະນູນສະບັບປີ 2015 ກໍເພື່ອ

ອ່ານຕໍ່ໜ້າ 11



ຄວາມຜິດພາດ... (ໜ້າ 8)


ໂລກ 10 ຊະນິດ... (ໜ້າ 9)


ຍີ່ປຸ່ນ ຈະປັບປຸງກົດໝາຍ... (ໜ້າ 10)

ວິເສດ ສະແຫວງສຶກສາ
ຄ່າເທັບສ້ຽງໜຶ່ງ... (ໜ້າ 12)

# ປິດຊຸດເຝິກອົບຮົມທິດສະດີການເມືອງສະເພາະດ້ານ



(ສພຊ) - ພາຍຫຼັງດຳເນີນມາເປັນເວລາ 3 ອາທິດ (15 ວັນ) ນັບແຕ່ວັນທີ 27 ມັງກອນ, ພິທີປິດຊຸດເຝິກອົບຮົມທິດສະດີການເມືອງສະເພາະດ້ານ ຊຸດທີ II ໃຫ້ແກ່ພະນັກງານຂະແໜງສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ສຳນັກສື່ມວນຊົນອ້ອມຂ້າງສູນກາງ ໄດ້ຈັດຂຶ້ນໃນວັນທີ 14 ກຸມພາ 2025 ໂດຍການເປັນປະທານຂອງທ່ານ ຣສ. ພູວົງ ອຸ່ນຄຳແສນ ຫົວໜ້າສະຖາບັນການເມືອງແລະການປົກຄອງແຫ່ງຊາດ ເຊິ່ງມີຄະນະພັກ-ຄະນະນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ) ພ້ອມດ້ວຍສຳມະນາກອນ 40 ກວ່າທ່ານເຂົ້າຮ່ວມ.

ຊຸດເຝິກອົບຮົມຄັ້ງນີ້, ບັນດາສຳມະນາກອນໄດ້ຮຽນຮູ້ກ່ຽວກັບຫຼັກມູນພື້ນຖານຂອງລັດທິມາກ-ເລນິນ, ສະພາບສາກົນແລະທ່າອຽງເສດຖະກິດສາກົນ, ບັນຫາພື້ນຖານຂອງແນວທາງກ້າວຂຶ້ນສັງຄົມນິຍົມ ແລະ ການພັດທະນາເສດຖະກິດຕາມທິດສັງຄົມນິຍົມຂອງປະເທດລາວ, ຄຸນສົມບັດສິນທຳປະຕິວັດ ແລະຈັນຍາບັນຂອງພະນັກງານນຳພາ-ຄຸ້ມຄອງ ໃນໄລຍະໃໝ່, ການກໍ່ສ້າງພັກປອດໃສ ເຂັ້ມແຂງໜັກແໜ້ນ, ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ, ການຄຸ້ມຄອງຊັບພະຍາກອນມະນຸດໃນກົງຈັກລັດ, ຍົກສູງຂີດຄວາມສາມາດ ໃນການຫັນມາກຸ້ມຕົນເອງທາງດ້ານງົບປະມານວິຊາການ.ຜ່ານການເຝິກອົບຮົມ, ບັນດາສຳມະນາກອນ ໄດ້ຮັບຄວາມຮູ້ໃໝ່ທາງດ້ານທິດສະດີການເມືອງ ແລະ ການປົກຄອງຕາມຫຼັກສູດສະເພາະດ້ານທີ່ມີມາດຕະຖານດີ; ເຂົ້າໃຈແຈ້ງ, ເຊື່ອມຊຶມທັດສະນະຂອງພັກຕໍ່ວຽກງານສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ພ້ອມທັງໄດ້ຍົກລະດັບວິຊາການດ້ານສື່ມວນຊົນໃນໄລຍະໃໝ່.

ທ່ານ ອຳຄາ ວົງໝື່ນກ້າ ຫົວໜ້າສະຖາບັນສື່ມວນຊົນ, ກະຊວງ ຖວທ ໄດ້ກ່າວວ່າ: ການຈັດເຝິກອົບຮົມຄັ້ງນີ້ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດດ້ານທິດສະດີການເມືອງ-ການປົກຄອງ, ແນວທາງນະໂຍບາຍຂອງພັກ, ການຄຸ້ມຄອງຂອງລັດ-ຄຸ້ມຄອງສັງຄົມ ເຮັດໃຫ້ເປົ້າໝາຍຜູ້ເຂົ້າຮຽນ ມີແນວຄິດທັດສະນະຫຼັກໝັ້ນຊົນຊັ້ນກຳມະກອນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ, ເຊື່ອໝັ້ນຕໍ່ອຸດົມການ ກໍຄືພາລະກິດປ່ຽນແປງໃໝ່ຢ່າງມີຫຼັກການຂອງພັກ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຈົ່ງຮັກພັກດີຕໍ່ປະເທດຊາດຕໍ່ປະຊາຊົນພ້ອມທັງມີຄວາມຫ້າວຫັນເປັນແບບຢ່າງທີ່ດີ ເຮັດໃຫ້ການປະຕິບັດໜ້າທີ່ວຽກງານສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ນັບມື້ນັບມີຄຸນນະພາບສູງຂຶ້ນ; ນອກຈາກນີ້, ຍັງເປັນການສ້າງບຸກຄະລາກອນໃນຂະແໜງສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີຄຸນທາດການເມືອງຢ່າງໜັກແໜ້ນ ແລະ ສາມາດໂຄສະນາເຜີຍແຜ່ແນວທາງຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃຫ້ກວ້າງຂວາງ, ຖືກຕ້ອງ, ຊັດເຈນທັງເປັນການເພີ່ມທັກສະຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບທັດສະນະຂອງພັກຕໍ່ວຽກງານສື່ມວນຊົນ.

# ປະເມີນຜົນການພັດທະນາໂຄງການ



(ສພຊ) - ວັນສຸກທີ 14 ກຸມພານີ້ ທີ່ໂຮງແຮງຄຣາວພລາຊາ ວຽງຈັນ, ກອງປະຊຸມຄວາມຄືບໜ້າສຳລັບ “ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ໃນການຄົ້ນຄວ້າແລະປັບປຸງນິຕິກຳ” ໄດ້ຈັດຂຶ້ນເພື່ອທົບທວນຄວາມຄືບໜ້າຂອງໂຄງການໃນໄລຍະ7ເດືອນຜ່ານມາ, ແຕ່ເດືອນມິຖຸນາ-ທັນວາ2024 ແລະວາງທິດທາງແຜນການໃນປີ 2025.

ຈຸດປະສົງກອງປະຊຸມແມ່ນເພື່ອປະເມີນຜົນການພັດທະນາໂຄງການ, ປຶກສາຫາລືກ່ຽວກັບຜົນໄດ້ຮັບ ແລະ ຂໍຄຳຄິດຄຳເຫັນຈາກຄະນະກຳມະການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ແລະ ວາງແຜນການໃນຕໍ່ໜ້າ; ນອກຈາກນີ້, ຍັງໄດ້ສຸມໃສ່ການປະເມີນປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດໂຄງການ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນໂດຍມູນນິທິອາຊີ(TAF)ຮ່ວມກັບຄະນະເລຂາທິການສະພາແຫ່ງຊາດ, ຕາງໜ້າໂດຍກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ (ICPMS) ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ຮອງຫົວໜ້າ ICPMS ແລະ ທ່ານ ນາງ Khaliungoo Ganbat ຮອງຜູ້ອຳນວຍການຫ້ອງການມູນນິທິອາຊີ ປະຈຳ ສປປລາວ; ເຂົ້າຮ່ວມມີຜູ້ຕາງໜ້າຈາກກຳມາທິການແຜນການ, ການເງິນແລະການກວດສອບ, ສະຖາບັນຄົ້ນຄວ້ານິຕິກຳ, ກົມອົງການຈັດຕັ້ງສາກົນກະຊວງການຕ່າງປະເທດ ພ້ອມດ້ວຍພະນັກງານຈາກ ICPMS ແລະ TAF ປະຈຳ ສປປລາວ.

# ສຳເລັດການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025




ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ໄດ້ດຳເນີນກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ໃນທົ່ວປະເທດ ທັງໝົດ 7 ຈຸດ, ໃນນີ້ຢູ່ອ້ອມຂ້າງສູນກາງມີ 1 ຈຸດ ເຊິ່ງມີບັນດາກະຊວງ, ອົງການອ້ອມຂ້າງສູນກາງເຂົ້າຮ່ວມຈັດຢູ່ໂຮງແຮມ ຣໍລິເດ ອິນ ໃນວັນທີ 16 ມັງກອນ 2025 ມີຜູ້ເຂົ້າຮ່ວມ 163 ທ່ານ ຍິງ 36 ທ່ານ. ສຳລັບຢູ່ທ້ອງຖິ່ນ ໄດ້ຈັດເປັນ 6 ຈຸດຕາມແຂວງ-ນະຄອນຫຼວງວຽງຈັນ ເລີ່ມແຕ່ວັນທີ 16-24 ມັງກອນ 2025 ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 559 ທ່ານ ຍິງ 107 ທ່ານ, ໃນນີ້ ຈັດຢູ່ນະຄອນຫຼວງວຽງຈັນ (ໂຮງແຮມ ຣໍລິເດ ອິນ) ປະກອບມີ 3 ແຂວງຄື: ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ (17 ມັງກອນ) ມີຜູ້ເຂົ້າຮ່ວມ 75 ທ່ານ ຍິງ 18 ທ່ານ; ຈັດຢູ່ແຂວງຫຼວງນ້ຳທາ ປະກອບມີ 3 ແຂວງຄື: ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ (23-24 ມັງກອນ) ມີຜູ້ເຂົ້າຮ່ວມ 102 ທ່ານ ຍິງ 19 ທ່ານ; ຈັດຢູ່ແຂວງຫຼວງພະບາງ ປະກອບມີ 3 ແຂວງຄື: ຫຼວງພະບາງ, ໄຊຍະບູລີ ແລະ ອຸດົມໄຊ (23-24 ມັງກອນ) ມີຜູ້ເຂົ້າຮ່ວມ 94 ທ່ານ ຍິງ 18 ທ່ານ; ຈັດຢູ່ແຂວງຊຽງຂວາງ ປະກອບມີ 3 ແຂວງຄື: ຊຽງຂວາງ, ໄຊສົມບູນ ແລະ ຫົວພັນ (16-17 ມັງກອນ) ມີຜູ້ເຂົ້າຮ່ວມ 89 ທ່ານ ຍິງ 14 ທ່ານ; ຈັດຢູ່ແຂວງສະຫວັນນະເຂດ ປະກອບມີ 3 ແຂວງຄື: ສະຫວັນນະເຂດ, ຄຳມ່ວນ ແລະ ຈຳປາສັກ (16-17 ມັງກອນ) ມີຜູ້ເຂົ້າຮ່ວມ 107 ທ່ານ ຍິງ 22 ທ່ານ; ຈັດຢູ່ແຂວງເຊກອງ ປະກອບມີ 3 ແຂວງຄື: ເຊກອງ, ສາລະວັນ ແລະ ອັດຕະປື (21-22 ມັງກອນ) ມີຜູ້ເຂົ້າຮ່ວມ 92 ທ່ານ ຍິງ 16 ທ່ານ. ລວມທັງໝົດທົ່ວປະເທດ ມີພະນັກງານນຳພາ-ຄຸ້ມຄອງຂອງບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ເຂົ້າຮ່ວມ 722 ທ່ານ, ຍິງ 143 ທ່ານ, ໃນນີ້ ໄດ້ມີຜູ້ປະກອບຄຳເຫັນ 299 ເທື່ອຄົນ ເປັນຍິງ 57 ເທື່ອຄົນ ທີ່ພົວພັນກັບຄຳນຳ ແລະ 103 ມາດຕາ ຂອງລັດຖະທຳມະນູນ ເຊິ່ງເປັນຂໍ້ມູນທີ່ເປັນປະໂຫຍດໃຫ້ແກ່ການປັບປຸງລັດຖະທຳມະນູນ.

ກອງປະຊຸມທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ທັງ 7 ຈຸດ ດຳເນີນໄປດ້ວຍບັນຍາກາດເຄັ່ງຮ້ອນເລັ່ງດ່ວນ ແລະ ເຕັມໄປດ້ວຍເນື້ອໃນຄວາມໝາຍສຳຄັນ ບວກກັບການມີຄວາມຮັບຜິດຊອບສູງຂອງຜູ້ເຂົ້າຮ່ວມ ທີ່ໄດ້ສຸມສະຕິຄົ້ນຄວ້າ, ປະກອບຄຳເຫັນໃສ່ຮ່າງລັດຖະທຳມະນູນ ຖືວ່າເປັນນິຕິກຳສູງສຸດຂອງລັດທີ່ເປັນກົດໝາຍພື້ນຖານຂອງຊາດເຮົາ; ໄປພ້ອມກັບການດຳເນີນກອງປະຊຸມທາບທາມຄຳເຫັນໃນຄັ້ງນີ້ ກໍໄດ້ດຳເນີນການທາບທາມຄຳເຫັນທາງກວ້າງຜ່ານພາຫະນະສື່ມວນຊົນ ເຊັ່ນ: ການຖະແຫຼງຂ່າວ, ເວັບໄຊ, ເຟສບຸກ ແລະ ຢູທູບ ເຊິ່ງມີຜູ້ເຂົ້າຊົມຫຼາຍສິບພັນຄັ້ງ. ເຖິງແນວໃດກໍຕາມ, ການທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນຄັ້ງນີ້ ມີເວລາຈຳກັດ, ເລັ່ງດ່ວນ ຈຶ່ງບໍ່ສາມາດຈັດສົ່ງເອກະສານໃຫ້ຜູ້ເຂົ້າຮ່ວມກອງປະຊຸມກ່ອນລ່ວງໜ້າ ເພື່ອມີເວລາໄດ້ອ່ານ, ແຕ່ໂດຍລວມແລ້ວ ຜູ້ເຂົ້າຮ່ວມກອງປະຊຸມກຳແໜ້ນຈຸດປະສົງແລະທັດສະນະຊີ້ນຳຕໍ່ການປັບປຸງທີ່ນຳມາທາບທາມຄຳເຫັນໃສ່ຮ່າງລັດຖະທຳມະນູນ ຈຶ່ງເຮັດໃຫ້ການປະກອບຄຳເຫັນໄດ້ດີພໍສົມຄວນ, ຖືກຕາມຈຸດປະສົງ ແລະ ທັດສະນະຊີ້ນຳໃນການປັບປຸງລັດຖະທຳມະນູນ.

ສຳລັບວຽກງານຈຸດສຸມໃນຕໍ່ໜ້າ, ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ຈະສຸມໃສ່ຈັດຕັ້ງປະຕິບັດແຜນການ, ແຜນດຳເນີນງານທີ່ໄດ້ກຳນົດໄວ້ແລ້ວ ແລະ ສູ້ຊົນປັບປຸງຮ່າງລັດຖະທຳມະນູນໃຫ້ສຳເລັດ ສາມາດນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນລະຫວ່າງອາທິດທີສອງຂອງເດືອນມີນາ 2025 ພິຈາລະນາຮັບຮອງ, ໃນນີ້ ຈະສຸມໃສ່ວຽກງານຮີບດ່ວນຕົ້ນຕໍຄື: 1) ຈັດກອງປະຊຸມຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແລະ ກະກຽມບົດລາຍງານຜົນການທາບທາມຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ຕໍ່ຄະນະປະຈຳສະພາແຫ່ງຊາດ, ກົມການເມືອງສູນກາງພັກ ແລະ ກອງປະຊຸມຄົບຄະນະສູນກາງພັກສະໄໝວິສາມັນ; 2) ຈັດກອງປະຊຸມຮຽບຮຽງ ແລະ ກວດກາເນື້ອໃນຮອບດ້ານຂອງຮ່າງລັດຖະທຳມະນູນ ສະບັບປັບປຸງປີ 2025 ໃຫ້ເປັນສະບັບສົມບູນໃນທ້າຍເດືອນກຸມພານີ້; 3) ກະກຽມບົດອະທິບາຍການປັບປຸງລັດຖະທຳມະນູນ ແລະ ເອກະສານທີ່ກ່ຽວຂ້ອງ ທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ IX ໃຫ້ຄົບຖ້ວນ ແລະ ຮັດກຸມ.




## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ປະຊຸມແຫ່ງຊາດ ໄດ້ດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ຄັ້ງທີ II ປະຈຳປີ 2024 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ ແລະ ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ຮອງນາຍົກລັດຖະມົນຕີ, ກຳມະການຄະນະປະຈຳສະພາແຫ່ງຊາດ, ສະມາຊິກລັດຖະບານ, ຮອງປະທານກຳມາທິການ ແລະ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຕາງໜ້າບັນດາກະຊວງ-ອົງການແລະພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອພ້ອມກັນທົບທວນຄືນການປະຕິບັດຜົນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ ຄັ້ງທີ I ປີ 2024 ທີ່ຜ່ານມາ, ທັງປຶກສາ ແລະແລກປ່ຽນຄຳເຫັນເພື່ອສ້າງຄວາມເປັນເອກະພາບຕໍ່ບັນດານະໂຍບາຍຈຳນວນໜຶ່ງເພື່ອຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມ, ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2025 ໃຫ້ສຳເລັດຕາມຄາດໝາຍທີ່ກຳນົດໄວ້ ກໍຄືຮັບປະກັນປະສິດທິພາບ ແລະ ປະສິດທິຜົນ; ພ້ອມກັນນັ້ນ, ກໍເພື່ອກວດກາຊຸກຍູ້ການກະກຽມຄວາມພ້ອມບັນດາຮ່າງກົດໝາຍ ກ່ອນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດໃນປີ 2025.

ສຳລັບເນື້ອໃນທີ່ນຳມາປຶກສາຫາລືໃນກອງປະຊຸມຄັ້ງນີ້, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ປຶກສາຫາລື, ຄົ້ນຄວ້າ ແລະເປັນເອກະພາບຕໍ່ບັນຫາທີ່ສຳຄັນຄື:

1. ຕີລາຄາການປະຕິບັດຜົນຂອງກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ ຄັ້ງຜ່ານມາ, ລວມທັງກົນໄກປະສານງານໃນໄລຍະຜ່ານມາ.

2. ບັນດາຫົວຂໍ້ກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝວິສາມັນ ແລະ ສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX; ການສ້າງ, ປັບປຸງ ແລະ ການໂຄສະນາເຜີຍແຜ່ກົດໝາຍ ແຕ່ປີ 2021-2024 ແລະ ທິດທາງໃນຕໍ່ໜ້າ.

3. ການປຶກສາຫາລືດ້ານຫຼັກການກ່ຽວກັບພາລະບົດບາດຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາການຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ, ການປ່ຽນແປງບາງມາດຕາຂອງກົດໝາຍ.

4. ການປຶກສາຫາລືດ້ານຫຼັກການກ່ຽວກັບນະໂຍບາຍ ແລະ ເງື່ອນໄຂສຳລັບການກໍ່ສ້າງເສັ້ນທາງ, ນິຄົມອຸດສາຫະກຳ, ການພັດທະນາແຮ່ທາດ ແລະ ການພັດທະນາໂຄງການພະລັງງານໄຟຟ້າ.

ຜ່ານການຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳເຫັນ, ກອງປະຊຸມເຫັນດີດ້ານຫຼັກການຕໍ່ການຕີລາຄາບັນດາວຽກງານເປັນຕົ້ນການພັດທະນາແລະຄຸ້ມຄອງແຮ່ທາດແລະໂຄງການແຮ່ຫາຍາກ; ແຜນການລົງທຶນຂອງລັດໃນປີ 2025; ການແກ້ໄຂຜົນການກວດສອບຜ່ານມາ, ທິດທາງ ແລະ ມາດຕະການແກ້ໄຂຜົນຂອງການກວດສອບໃນຕໍ່ໜ້າ; ການກະກຽມຮ່າງແຜນງົບປະມານປີ2025; ມາດຕະການໃນການນຳເຂົ້ານ້ຳມັນເຊື້ອໄຟ ແລະ ການສົ່ງເສີມການຜະລິດ-ປຸງແຕ່ງພາຍໃນ ແລະ ດັດສົມລາຄານ້ຳມັນເຊື້ອໄຟ ຕາມມະຕິເລກທີ 103/ຄປຈ, ລົງວັນທີ 9 ພຶດສະພາ 2022 ແລະ ມະຕິເລກທີ 168/ຄປຈ, ລົງວັນທີ 6 ມິຖຸນາ 2022; ມາດຕະການໃນການສົ່ງເສີມການຜະລິດພາຍໃນ, ການຄຸ້ມຄອງລາຄາສິນຄ້າ, ການນຳເຂົ້າ, ການຈຳກັດສິນຄ້າຟຸມເຟືອຍ, ສິນຄ້າທີ່ພາຍໃນຜະລິດໄດ້ ແລະ ຄຸ້ມຄອງການສົ່ງອອກສິນຄ້າ; ການຈັດຕັ້ງປະຕິບັດແຜນການສ້າງແລະປັບປຸງກົດໝາຍ, ການໂຄສະນາເຜີຍແຜ່ກົດໝາຍ; ຕີລາຄາກົນໄກປະສານງານລະຫວ່າງສະພາແຫ່ງຊາດ ກັບລັດຖະບານ. ພ້ອມກັນນີ້, ກອງປະຊຸມໄດ້ຊີ້ນຳໃຫ້ກະຊວງຍຸຕິທຳ ເປັນໃຈກາງສົມທົບກັບບັນດາກະຊວງແລະກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ສືບຕໍ່ກະກຽມຄວາມພ້ອມບັນດາຮ່າງກົດໝາຍສ້າງໃໝ່ ແລະ ປັບປຸງ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ແລະ ສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ດີ, ຮັບປະກັນທາງດ້ານເນື້ອໃນແລະທັນຕາມກຳນົດເວລາ; ໃຫ້ບັນດາກະຊວງສືບຕໍ່ສົມທົບກັບກະຊວງຍຸຕິທຳ ແລະ ກຳມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ ຄົ້ນຄວ້າ, ທົບທວນຄືນກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີປັບປຸງມາດຕາທີ່ບໍ່ສອດຄ່ອງກັບສະພາບຕົວຈິງ; ພ້ອມນີ້, ໃຫ້ກະຊວງຍຸຕິທຳ ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍໃຫ້ແຂງແຮງກວ່າເກົ່າ ໂດຍນຳໃຊ້ຫຼາຍຮູບແບບ, ຫຼາຍຊ່ອງທາງ ແລະ ຕໍ່ເນື່ອງ, ດ້ານເນື້ອໃນການໂຄສະນາ ກໍໃຫ້ປັບປຸງໃຫ້ກະທັດຮັດ, ຈະແຈ້ງແລະເຂົ້າໃຈງ່າຍ. ໃຫ້ກະຊວງແຜນການແລະການລົງທຶນ, ກະຊວງການເງິນ, ກະຊວງໂຍທາທິການ ແລະຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຄົ້ນຄວ້າກຳນົດ, ປັບປຸງນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງ ໃຫ້ສອດຄ່ອງ ແລະ ແທດຕົວຈິງ ເພື່ອແກ້ໄຂບັນດາຂໍ້ຄົງຄ້າງ ແລະ ບໍ່ທັນໂລ່ງລ່ຽນ ທີ່ຕິດພັນກັບຂະແໜງການຂອງຕົນພ້ອມທັງສ້າງ ແລະ ປັບປຸງກົນໄກການຕິດຕາມ ຊຸກຍູ້, ການຄຸ້ມຄອງ, ການເກັບລາຍຮັບ, ການອຳນວຍຄວາມສະດວກດ້ານຕ່າງໆ ເຮັດໃຫ້ການພັດທະນາດ້ານຄົມມະນາຄົມຂົນສົ່ງ, ນິຄົມອຸດສາຫະກຳ, ການພັດທະນາແຮ່ທາດ ແລະ ໂຄງການພະລັງງານໄຟຟ້າສອດຄ່ອງກັບນະໂຍບາຍການພັດທະນາສີຂຽວ, ຍືນຍົງ ແລະ ນຳເອົາຜົນປະໂຫຍດສູງສຸດມາສູ່ປະເທດຊາດ ແລະ ປະຊາຊົນ. ພ້ອມກັນນີ້, ກອງປະຊຸມໄດ້ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຄະນະເລຂາທິການສະພາແຫ່ງຊາດ ສັງລວມເອົາຄຳຄິດຄຳເຫັນແລະຜົນກອງປະຊຸມໃນຄັ້ງນີ້ເຂົ້າໃນບົດບັນທຶກກອງປະຊຸມ ເພື່ອເປັນບ່ອນອີງໃຫ້ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ ແລະ ສະຫຼຸບລາຍງານຜົນການແກ້ໄຂຕໍ່ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະລັດຖະບານ ຄັ້ງຕໍ່ໄປ ເຊິ່ງຜົນຂອງກອງປະຊຸມໃນຄັ້ງນີ້ ຈະເປັນບ່ອນອີງທີ່ສຳຄັນໃຫ້ລັດຖະບານນຳໄປຈັດຕັ້ງຜັນຂະຫຍາຍຕົວຈິງເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດແຜນວຽກຈຸດສຸມ ກໍຄືແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2025 ໃຫ້ມີຜົນສຳເລັດ ແລະ ມີປະສິດ ທິຜົນເປັນຢ່າງດີ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນດ້ວຍບັນຍາກາດເອົາການເອົາງານ ແລະ ຮັບຜິດຊອບສູງ ເຊິ່ງບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນປຶກສາຫາລື, ແລກປ່ຽນຄຳເຫັນດ້ວຍຄວາມຈິງໃຈ, ກົງໄປກົງມາ ແລະ ສ້າງຄວາມເປັນເອກະພາບສູງຕໍ່ບັນດາເນື້ອໃນທີ່ນຳເຂົ້າພິຈາລະນາໃນກອງປະຊຸມຄັ້ງນີ້ ໂດຍສະເພາະການປຶກສາຫາລືແລະເປັນເອກະພາບວິທີການແກ້ໄຂບັນຫາຫຍຸ້ງຍາກຕ່າງໆ ເຊິ່ງສ່ອງແສງເຖິງຄວາມຮັບຜິດຊອບສູງຂອງສະພາແຫ່ງຊາດ ແລະລັດຖະບານກໍຄືຄວາມເປັນຫ່ວງເປັນໄຍຕໍ່ປະເທດຊາດ ແລະ ປະຊາຊົນ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີປະສິດທິຜົນ, ປະເທດຊາດມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການປັບປຸງໃຫ້ນັບມື້ດີຂຶ້ນ.

**(ຂ່າວ: ກົມປະຊາສຳພັນ, ຫສນຍ; ພາບ: ກົມສື່ມວນຊົນ, ສພຊ)**



## ປະທານ...

(ຕໍ່ຈາກໜ້າ 1)

ນະ ພ້ອມທັງສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ຄັ້ງນີ້ ເປັນການປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີລະຫວ່າງສອງປະເທດ, ໃນເດືອນກັນຍາທີ່ຈະມາເຖິງນີ້ ການສ້າງຕັ້ງສາຍພົວພັນການທູດ ລາວ-ມົງໂກລີ ກໍຈະຄົບຮອບ 63 ປີ (12/9/1962-12/9/2025) ເຊິ່ງສອງປະເທດໄດ້ມີການພົວພັນຮ່ວມມືກັນຢ່າງໃກ້ຊິດ ແລະ ເປັນປົກກະຕິ ບົນຫຼັກການສາຍພົວພັນມິດຕະພາບ ແລະ ການຮ່ວມມື ໂດຍມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ນຳກັນ; ພິເສດ, ໃນປີ 2023 ທ່ານ ຄູເຣລສຸກຄ໌ ໂອຄະນາ (U. Khurelsukh) ປະທານາທິບໍດີມົງໂກລີ ໄດ້ຢ້ຽມຢາມລັດຖະກິດທີ່ ສປປລາວ ແລະ ໃນປີ 2024 ທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປລາວ ໄດ້ຢ້ຽມຢາມທາງລັດຖະກິດທີ່ມົງໂກລີ. ນອກຈາກນັ້ນ, ສອງປະເທດຍັງໄດ້ມີການຮ່ວມມືກັນໃນຫຼາຍຂົງເຂດວຽກງານ ອັນພົ້ນເດັ່ນແມ່ນການຮ່ວມມືໃນຂົງເຂດການສຶກສາ, ສາທາລະນະສຸກ ແລະ ກະສິກຳ-ລ້ຽງສັດ.

ສະພາແຫ່ງຊາດລາວ ແລະສະພາຄູຣານໃຫຍ່ແຫ່ງມົງໂກລີ ໄດ້ມີການພົວພັນຮ່ວມມືນຳກັນເປັນຢ່າງດີ ແລະ ຕໍ່ເນື່ອງໃນຫຼາຍລະດັບບົນພື້ນຖານການຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທີ່ໄດ້ລົງນາມໃນປີ 2023; ສອງອົງການນິຕິບັນຍັດ ໄດ້ມີການໄປມາຫາສູ່ ແລະ ແລກປ່ຽນຄະນະຜູ້ແທນນຳກັນ ເປັນຕົ້ນແມ່ນການນຳຂັ້ນສູງ, ຂັ້ນກຳມາທິການ, ຄະນະມິດຕະພາບລັດຖະສະພາ ແລະ ຂັ້ນຕ່າງໆ. ພິເສດ, ໃນເດືອນຕຸລາ 2023, ປະທານສະພາແຫ່ງຊາດລາວພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມ ແລະ ພົບປະກັບການນຳຂັ້ນສູງ ແລະ ຂັ້ນຕ່າງໆຂອງມົງໂກລີ, ຮອງປະທານສະພາແຫ່ງຊາດລາວ ໄດ້ໄປຢ້ຽມຢາມມອບໂຕະ-ຕັ່ງ ເປັນຂອງຂວັນໃຫ້ແກ່ສະພາຄູຣານໃຫຍ່ ພາຍຫຼັງທີ່ມີການເພີ່ມຈຳນວນສະມາຊິກ ເປັນ 126 ທ່ານ ໃນປີ 2024 ຜ່ານມາ, ຄະນະມິດຕະພາບລັດຖະສະພາ ມົງໂກລີ-ລາວແລະເລຂາທິການໃຫຍ່ສະພາຄູຣານໃຫຍ່ແຫ່ງມົງໂກລີ ກໍໄດ້ມາຢ້ຽມຢາມແລະເຮັດວຽກຢູ່ ສປປລາວ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີລະຫວ່າງສອງປະເທດ ກໍຄືການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາຄູຣານໃຫຍ່ມົງໂກລີ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ; ພ້ອມກັນນີ້, ສອງອົງການນິຕິບັນຍັດ ກໍໄດ້ມີການແລກປ່ຽນຄຳຄິດຄຳເຫັນໃນກອງປະຊຸມແບບທາງໄກ, ແລກປ່ຽນສານຊົມເຊີຍ, ສານອວຍພອນໃນໂອກາດວັນສຳຄັນຂອງຊາດ, ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອປະກອບສ່ວນເຂົ້າໃນການສ້າງສັນຕິພາບ, ສະຖຽນລະພາບ, ມິດຕະພາບແລະການຮ່ວມມືເພື່ອການພັດທະນາແບບຍືນຍົງ.

ທ່ານ ຊັກຈາວ ເຕເລັກ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບອັນອົບອຸ່ນຂອງທ່ານປະທານສະພາແຫ່ງຊາດ ພ້ອມທັງແຈ້ງສະພາບການທີ່ພົ້ນເດັ່ນການເຄື່ອນໄຫວວຽກງານຂອງສຳນັກງານກວດສອບແຫ່ງຊາດມົງໂກລີໃຫ້ຮັບຊາບ; ລາຍງານຜົນສຳເລັດການພົບປະສອງຝ່າຍກັບປະທານອົງການກວດສອບແຫ່ງລັດໃນຕອນເຊົ້າຂອງວັນດຽວກັນ ເຊິ່ງສອງຝ່າຍໄດ້ຮ່ວມກັນລົງນາມໃສ່ບົດບັນທຶກຄວາມເຂົ້າໃຈລະຫວ່າງສຳນັກງານກວດສອບແຫ່ງຊາດມົງໂກລີ ແລະ ອົງການກວດສອບແຫ່ງລັດ ສປປລາວ ເຊິ່ງຈະເປັນນິຕິກຳທີ່ເປັນບ່ອນອີງທີ່ດີເພື່ອເສີມຂະຫຍາຍການຮ່ວມມື, ການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ ໃນການພັດທະນາວຽກງານວິຊາສະເພາະໃຫ້ເຂັ້ມແຂງຍິ່ງໆຂຶ້ນ.

# ສສຊ ແລະ ສສນວ ພົບປະຜູ້ມີສິດເລືອກຕັ້ງ 5 ເມືອງ

(ສພຊ) - ວັນທີ 10-11 ກຸມພານີ້ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ


ເມືອງສີໂຄດຕະບອງ

(ສສນວ) ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 5 ເມືອງຄື: ນາຊາຍທອງ, ຫາດຊາຍຟອງ, ຈັນທະບູລີ, ສັງທອງ ແລະ ສີໂຄດຕະບອງ ໂດຍແຕ່ລະຈຸດມີບັນດາຄະນະພັກເມືອງ, ພະນັກງານລົງກໍ່ສ້າງຮາກຖານ, ອຳນາດການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານຂອງ 5 ເມືອງດັ່ງກ່າວເຂົ້າຮ່ວມ; ທັງນີ້, ກໍເພື່ອ


ເມືອງນາຊາຍທອງ

ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ທັງເປັນການຮັບຟັງຄຳຄິດເຫັນ ແລະຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ເພື່ອຈະໄດ້ນຳສະເໜີຕໍ່ອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ນຳໄປຄົ້ນຄວ້າພິຈາລະນາແກ້ໄຂ.

ທ່ານບຸນຕາ ເທບພະວົງ ປະທານກຳມາທິການວັດທະນະທຳ-ສັງຄົມ ແລະທ່ານ ບຸນທານ ພຸດທະວົງສາ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ ໄດ້ພົບປະຜູ້ມີສິດເລືອກຕັ້ງຢູ່ກຸ່ມບ້ານໃໝ່ບ້ານໜອງດາ ເມືອງສີໂຄດຕະບອງ; ທ່ານ ນາງ ວິໄຊ ສຣິດທິຣາດ ຮອງປະທານກຳມາທິການແຜນການ, ການເງິນແລະການກວດສອບແລະທ່ານພູວອນ ພົງລາດແກ້ວ ສສນວ ປະຈຳເຂດເລືອກຕັ້ງເມືອງ, ຮອງເຈົ້າເມືອງນາຊາຍທອງ ໄດ້ພົບປະຜູ້ມີສິດເລືອກຕັ້ງຢູ່ 8 ບ້ານຂອງເມືອງນາຊາຍທອງຄື: ນາຊາຍທອງກາງ, ນາຊາຍທອງເໜືອ, ນາຊາຍທອງໃຕ້, ດົງຫຼວງ, ປັກແຮດ, ດົງບອງ, ໜອງຍາວ ແລະ ນາຄູນ; ທ່ານ ຈັນທະລາ ອຸດົມສຸກ ແລະ ທ່ານ ທະນົງສິດ ເມືອງຈັນ ສສຊ ປະຈຳເຂດເລືອກຕັ້ງທີ 1 ພ້ອມດ້ວຍທ່ານ ສຸກສະຫວັນ ບຸດຕະວົງ ແລະ ທ່ານ ລຳເຜີດ ຄຳຄໍ້ຣົມພັນ ສສນວປະຈຳເຂດເລືອກຕັ້ງເມືອງ ໄດ້ພົບປະຜູ້ມີສິດເລືອກຕັ້ງເມືອງຫາດຊາຍຟອງ; ທ່ານ ສາລະພົດ ສູນວໍລະວົງ ສສຊ ປະຈຳເຂດເລືອກຕັ້ງທີ 1 ແລະ ທ່ານ ລຸນທອງ ບຸນມະນີ ສສນວ ປະຈຳເຂດເລືອກຕັ້ງເມືອງ ໄດ້ພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານປາກແຖບ ເມືອງສັງທອງ; ສສນວ ປະຈຳເຂດເລືອກຕັ້ງເມືອງ ນຳໂດຍທ່ານ ນະຄະເສນ ສີຫາລາດ ເລຂາທິ


ເມືອງສັງທອງ

ການ ສປນວ, ທ່ານ ບຸນເຖິງ ສຸວັນນະສີ ແລະທ່ານ ນາງ ໄຊສົມບັດ ວົງພັກດີ ໄດ້ພົບປະຜູ້ມີສິດເລືອກຕັ້ງຢູ່ 6 ບ້ານ ທີ່ວັດດອນແດງ ເມືອງຈັນທະບູລີຄື: ດອນແດງ, ໜອງທາເໜືອ-ໃຕ້, ຫ້ວຍຫົງ, ໂພນສະຫວ່າງ, ບໍ່ນາງົວ ແລະ ໜອງປິງ.

ໃນການເຄື່ອນໄຫວ, ສສຊ ແລະ ສສນວ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສປນວ ຊຸດທີ II ກໍຄືບັນດາບັນຫາສຳຄັນຕ່າງໆທີ່ໄດ້ພິຈາລະນາ ແລະຮັບຮອງເອົາໃນກອງປະຊຸມ ໂດຍສະເພາະຜົນການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ, ຂອງອົງການປົກຄອງນະຄອນຫຼວງ


ເມືອງຈັນທະບູລີ

ວຽງຈັນ ໃນທຸກຂົງເຂດວຽກງານໃນໄລຍະຜ່ານມາ ແລະທິດທາງແຜນການໃນຕໍ່ໜ້າ ແນໃສ່ເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ເຊື່ອມຊຶມ, ຮັບຮູ້ ແລະ ເຂົ້າໃຈຢ່າງກວ້າງຂວາງກ່ຽວກັບຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ; ພ້ອມນັ້ນ, ກໍເພື່ອຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍແລະບັນດາບັນຫາພົ້ນເດັ່ນຕ່າງໆ ທີ່ຈະເປັນຂໍ້ມູນໃຫ້ແກ່ສສຊແລະສສນວ ໄດ້ນຳໄປຄົ້ນຄວ້າພິຈາລະນາປະກອບຄຳຄິດຄຳເຫັນໃນການພິຈາລະນາບັນຫາສຳຄັນຕ່າງໆໃນກອງປະຊຸມສະໄໝສາມັນຄັ້ງຕໍ່ໄປ ພ້ອມທັງນຳສະເໜີຕໍ່ອົງການປົກຄອງ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດ.


ເມືອງຫາດຊາຍຟອງ

**(ສັງລວມຈາກເພຈ ໜສພ. ວຽງຈັນໃໝ່ ແລະ ປະຊາຊົນ)**

# ສສຊ-ສສຂ ຫຼວງນ້ຳທາ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ



(ສພຂ) - ວັນທີ 6-7 ກຸມພາຜ່ານມາ, ທ່ານ ຄຳຟອງ ອິນມານີ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 3, ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ຊຸດທີ II ຢູ່ 3 ຈຸດຂອງເມືອງວຽງພູຄາ ຄື: ສະໂມສອນເມືອງ, ບ້ານດົງວຽງ ແລະ ບ້ານທົ່ງລາດ; ໂດຍມີການນຳເມືອງ, ພະນັກງານຫຼັກແຫຼ່ງ, ອຳນາດການປົກຄອງບ້ານພ້ອມດ້ວຍປະຊາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳຟອງ ອິນມານີ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ເຊິ່ງໄດ້ພິຈາລະນາ, ຮັບຮອງເອົາວຽກງານສຳຄັນຂອງປະເທດຊາດເປັນຕົ້ນ: ການຈັດຕັ້ງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດປະຈຳປີ 2024; ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2023; ວິໄສທັດຮອດປີ2040ແລະຍຸດທະສາດການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກຳ ຮອດປີ 2030; ການຈັດຕັ້ງປະຕິບັດວຽກງານ 3 ສ້າງ; ການສ້າງ ແລະ ປັບປຸງກົດໝາຍ 9 ສະບັບ ໃນນີ້, ສ້າງໃໝ່ 2 ສະບັບ ແລະປັບປຸງ 7 ສະບັບ. ຈາກນັ້ນ, ສສຂ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາສຳຄັນຂອງແຂວງເປັນຕົ້ນ: ວຽກງານຂອງອົງການປົກຄອງແຂວງ, ໄອຍະການ ແລະ ສານປະຊາຊົນແຂວງ, ແລະ ສະພາປະຊາຊົນແຂວງ ປະຈຳປີ 2024 ແລະທິດທາງແຜນການປີ 2025; ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສົ່ງເສີມ ແລະ ພັດທະນາກິລາກາຍະກຳຂອງແຂວງ (ປັບປຸງ) ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ (ປັບປຸງ); ບົດລາຍງານການຈັດຕັ້ງປະຕິບັດແຜນຟື້ນຟູ-ປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳທາ 1 ເມືອງນາແລ ໄລຍະທີ 1 (2020-2023) ແລະ ແຜນການໄລຍະທີ 2 (2025-2028). ພ້ອມກັນນັ້ນ, ຍັງໄດ້ຮັບຟັງຄຳສະເໜີທີ່ຕິດພັນກັບບັນຫາທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ບ້ານ, ເມືອງ ເພື່ອສະເໜີໃຫ້ ສສຊ, ສສຂ ນຳໄປຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຊອກຫາວິທີແກ້ໄຂຕາມຄວາມເປັນຈິງ.

ໂອກາດນີ້, ຄະນະຍັງໄດ້ມອບຄອມພິວເຕີຕັ້ງໂຕະ 1 ຊຸດ ໃຫ້ຜູ້ຊ່ວຍວຽກສສຂປະຈຳເຂດເລືອກຕັ້ງເມືອງ ແລະ ລົດຖີບ 7 ຄັນ ທີ່ໄດ້ຮັບຈາກໂຄງການນ້ຳໃຈຮັກລາວ ມູນນິທິຈີນເພື່ອການພັດທະນາມອບໃຫ້ຫ້ອງການສຶກສາທິການແລະກິລາເມືອງເພື່ອມອບຕໍ່ໃຫ້ນ້ອງນ້ອຍນັກຮຽນທີ່ທຸກຍາກຂາດເຂີນພາຍໃນເມືອງ ທັງມອບອຸປະກອນການຮຽນໃຫ້ແກ່ນ້ອງນັກຮຽນບ້ານທົ່ງລາດ ແລະ ບ້ານຫ້ວຍທົກອີກດ້ວຍ.

ໃນໄລຍະດຽວກັນ, ທ່ານ ນາງ ເກສອນ ແສງຍະວົງ ສສຊ, ປະທານຄະນະກຳມະການວັດທະນາທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ບຸນຄົງ ພົມມະສອນ ຫົວໜ້າຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງຫຼວງນ້ຳທາ ພ້ອມດ້ວຍສສຂປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ 3ບ້ານຂອງເມືອງຫຼວງນ້ຳທາຄື: ຕາຫວ່າມ, ຕີນຕົກແລະຕີນສານ ໂດຍມີນາຍບ້ານ, ອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງໝົດ 350 ຄົນ, ຍິງ 154 ຄົນ. ນອກນັ້ນ, ຍັງໄດ້ນຳເອົາອຸປະກອນການສຶກສາ ເຊິ່ງປະກອບມີປຶ້ມ 250 ຫົວ, ບິກ 100ກ້ານແລະບັນທັດ100ອັນ ມອບໃຫ້ນ້ອງນ້ອຍນັກຮຽນທີ່ທຸກຍາກຂາດເຂີນຢູ່ບ້ານຕີນສານ.



**(ນາງ ວັນນີ ແຝງບົວວັນ ແລະ ຄຳໄຊ ມີວິໄລ)**

# ສພຂ ຫົວພັນ ສະຫຼຸບຖອດຖອນ ບົດຮຽນວຽກງານໂຄງການ STEPS

(ສພຂ) - ຕອນເຊົ້າວັນພະຫັດທີ 6 ກຸມພາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ນຳໃຊ້ທຶນໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPS) ປະຈຳປີ 2024 ແລະທິດທາງແຜນການປີ 2025 ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນ ສພຂ.



ໃນກອງປະຊຸມໄດ້ຮັບຟັງການສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດກິດຈະກຳທີ່ນຳໃຊ້ທຶນຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ ໃນປີ 2024 ແລະວາງທິດທາງແຜນການຕໍ່ໜ້າ ເຊິ່ງໄດ້ສ່ອງແສງໃຫ້ເຫັນດ້ານດີ ຜົນງານ, ດ້ານຄົງຄ້າງ ແລະ ບົດຮຽນຖອດຖອນໄດ້; ຈາກນັ້ນ, ໄດ້ພ້ອມກັນປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ວຽກງານໂຄງການດັ່ງກ່າວທີ່ຈະສືບຕໍ່ຈັດຕັ້ງປະຕິບັດໃນຕໍ່ໜ້າ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນເປັນຕົ້ນແມ່ນບັນດາຫົວຂໍ້ຈັດເຝິກອົບຮົມ, ສຳມະນາ ແລະ ແຜນການການຕິດກວດກາຂອງສສຊ-ສສຂ ປະຈຳເຂດເລືອກຕັ້ງ, ງົບປະມານ, ວິທະຍາກອນ, ສຳມະນາກອນ, ສະຖານທີ່, ອຸປະກອນຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກດ້ານຕ່າງໆເຂົ້າໃນການເຝິກອົບຮົມ ໃຫ້ມີຄວາມເໝາະສົມ, ຮັບປະກັນທັງປະລິມານ ແລະ ຄຸນນະພາບດີຂຶ້ນ.

ທ່ານຄອນປະພັນເລືອງສີຈັນທອງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະຮັບຜິດຊອບປະສານງານໂຄງການ ແລະ ຄະນະປະສານງານກັບຄະນະຮັບຜິດຊອບໂຄງການ ທີ່ໄດ້ພ້ອມກັນເອົາໃຈໃສ່ຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດກິ່ງດູດການຊ່ວຍເຫຼືອດ້ານທຶນຮອນລ້ຳຄ່າມາພັດທະນາວຽກງານການສ້າງເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເຊິ່ງສາມາດຈັດຕັ້ງປະຕິບັດສຳເລັດບັນດາກິດຈະກຳຕ່າງໆຕາມແຜນການວາງໄວ້; ທັງຮຽກຮ້ອງໃຫ້ຄະນະຮັບຜິດຊອບໂຄງການເອົາໃຈໃສ່ສືບຕໍ່ບາງດ້ານເປັນຕົ້ນແມ່ນຂອດການປະສານງານກັບຄະນະປະສານງານໂຄງການ, ພາກສ່ວນກ່ຽວຂ້ອງຂອງສະພາແຫ່ງຊາດໃຫ້ມີຄວາມຄ່ອງຕົວດີຂຶ້ນກວ່າເກົ່າ, ແທດເໝາະກັບໜ້າທີ່ວຽກງານຕົວຈິງ ເພື່ອສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບແລະປະສິດທິຜົນສູງສຸດໃນຕໍ່ໜ້າ.

**(ເວີນ ແກ້ວບຸນມີ)**

# ຮອງປະທານ ສພຂ ຄຳມ່ວນ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8



(ສພຂ) - ວັນທີ 3-6 ກຸມພານີ້, ທ່ານ ນາງ ບົງອອນ ໄຊຍະສິດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 12, ຮອງປະທານສະພາປະຊາຊົນແຂວງແຂວງຄຳມ່ວນ ແລະ ທ່ານ ວິໄລ ພົມມະຈັກ ສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງເມືອງເຊບັ້ງໄຟ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 8 ບ້ານຂອງເມືອງເຊບັ້ງໄຟ ຄື: ໂຄກສະຫວ່າງ, ທັບ, ນາທານ, ເຊນ້ອຍ, ທ່າຄໍ້, ທ່າຫາດ, ເວີນສະນັ່ນ ແລະ ກະສີ; ໂດຍການຕ້ອນຮັບຈາກຄະນະພັກເມືອງ, ຄະນະພັກຮາກຖານກຸ່ມບ້ານ, ອົງການຈັດຕັ້ງບ້ານ, ພະນັກງານ-ລັດຖະກອນ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນ ເຂົ້າຮ່ວມ 787 ເທື່ອຄົນ, ຍິງ 298 ເທື່ອຄົນ.

ຈຸດປະສົງແມ່ນເພື່ອນຳເອົາຜົນສຳເລັດຂອງການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ກຳລັງ ປກຊ-ປກສ, ອຳນາດການປົກຄອງຂັ້ນບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ໄດ້ຮັບຮູ້, ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ເວົ້າລວມ, ເວົ້າສະເພາະກໍຄືວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕິດພັນກັບການຮັບຟັງຄຳຄິດເຫັນ, ຄຳສະເໜີ, ຂໍ້ຂັດຂ້ອງໝອງໃຈຂອງພໍ່ແມ່ປະຊາຊົນ ເພື່ອນຳໄປຄົ້ນຄວ້າ ແລະ ຊຸກຍູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃນຕໍ່ໜ້າ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບທີ່ຕັ້ງແລະຈຸດພິເສດ, ການເມືອງ-ແນວຄິດ, ວຽກງານປກຊ-ປກສ, ການພັດທະນາເສດຖະກິດ-ສັງຄົມແລະທິດທາງແຜນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າຂອງບັນດາບ້ານ ທີ່ສະແດງໃຫ້ເຫັນຂໍ້ສະດວກ ແລະ ຂໍ້ຄົງຄ້າງ, ວຽກງານຈຸດສຸມໃນຕໍ່ໜ້າທີ່ຈະຕ້ອງໃຫ້ສຳເລັດ.

ທ່ານ ນາງ ບົງອອນ ໄຊຍະສິດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານຮອບດ້ານທີ່ຍາດມາໄດ້ໃນໄລຍະຜ່ານມາ ທັງຕີລາຄາສູງຕໍ່ຄວາມດຸໝັ່ນ ແລະ ມີຫົວຄິດພັດທະນາຂອງປະຊາຊົນ ທັງສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງຄະນະພັກຂອງເມືອງ, ພໍ່ແມ່ປະຊາຊົນ; ພ້ອມທັງໃຫ້ທິດຊີ້ນຳຕໍ່ຄະນະພັກເມືອງ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ ຈົ່ງພ້ອມກັນຮັກສາມູນເຊື້ອຄວາມສາມັກຄີຮັກແພງເປັນປຶກແຜ່ນ, ສືບຕໍ່ປະຕິບັດມະຕິຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຮັບຮູ້ສິດນຳໃຊ້ທີ່ດິນໃຫ້ປະຊາຊົນທີ່ອາໄສຢູ່ 3 ປະເພດປ່າແລະຊຸກຍູ້ການອອກໃບຕາດິນໃຫ້ບັນລຸຕາມແຜນການ, ຊຸກຍູ້ສົ່ງເສີມລູກຫຼານໄດ້ຮັບການສຶກສາຮ່ຳຮຽນໃຫ້ມີຄວາມຮູ້ຄວາມສາມາດ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດໃນຄອບຄົວມີຄວາມເຂັ້ມແຂງ ເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ ນຳເອົາເມືອງເຊບັ້ງໄຟກ້າວຂຶ້ນຢ່າງໜັກແໜ້ນ.

**(ເອື້ອ ມະໂນສິງ)**

# ປະຊາຊົນ 3 ຈຸດຂອງເມືອງເຊໂປນ ສະເໜີໃຫ້ຊ່ວຍຫຼາຍບັນຫາສຳຄັນ



(ສພຂ) - ວັນທີ 10-11 ກຸມພາຜ່ານມາ, ທ່ານ ວໍລະສິດ ສີວົງດາວ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13, ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ທ່ານ ບຸນສູງ ໄຊຍະວົງ ຮອງເລຂາພັກເມືອງ, ປະທານກວດກາພັກ-ລັດເມືອງ ທັງເປັນສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງເຊໂປນ ພ້ອມດ້ວຍຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວພົບປະໂອ້ລົມຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ຢູ່ 3 ຈຸດຂອງເມືອງເຊໂປນ ຄື: ບ້ານວັງໝໍ້ທຸ່ມ, ບ້ານຫ້ວຍຈັງແລະບ້ານນາຫົວນ້ຳ.

ໃນແຕ່ລະຈຸດ, ບັນດາພໍ່ແມ່ປະຊາຊົນໄດ້ສະເໜີບັນຫາຕ່າງໆທີ່ເກີດຂຶ້ນໃນຂອບເຂດບ້ານຂອງຕົນ ເປັນຕົ້ນ ບ້ານວັງໝໍ້ທຸ່ມ ຂໍໃຫ້ຊ່ວຍຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ປັບປຸງເສັ້ນທາງ 28A ໃຫ້ສຳເລັດໂດຍໄວ ເພາະວ່າປະຊາຊົນໃຊ້ຊີວິດລຳບາກເນື່ອງຈາກບັນຫາຂີ້ຝຸ່ນ; ສ້າງໂຮງຮຽນປະຖົມໃຫ້ເດັກນ້ອຍຢູ່ເຂດຄຸ້ມບ້ານປຸງ ທີ່ຍັງບໍ່ມີໂຮງຮຽນ; ອອກໃບຕາດິນ, ກຳນົດເຂດລະຫວ່າງບ້ານຕໍ່ບ້ານເຊັ່ນ: ບ້ານປຸງກັບບ້ານສີບມີ່; ຂໍຕົວເລກລັດຖະກອນໃຫ້ຄູອາສາຢູ່ບ້ານປຸງທີ່ໄດ້ສອນມາເປັນເວລາ 10 ປີແລ້ວ; ຂໍໃຫ້ໜ່ວຍງານກະສິກຳ ຊຸກຍູ້ພໍ່ແມ່ປະຊາຊົນຕື່ມໃນການປູກ-ການລ້ຽງ; ຂໍໃຫ້ຊ່ວຍຊຸກຍູ້ຕື່ມເລື່ອງພະນັກງານທະຫານເກົ່າຢາກໄດ້ເງິນອຸດໜູນຈາກກົມກອງທີ່ເຄີຍເຮັດວຽກຜ່ານມາ; ຂໍໃຫ້ແກ້ໄຂຊ່ວຍຕື່ມບັນຫາເຂດແດນບ້ານລາດກັບບ້ານນາມາຣີເມືອງວິລະບູລີ ເຊິ່ງປະຊາຊົນບໍ່ສາມາດຕົກລົງກັນໄດ້; ຊ່ວຍສະໜອງຕື່ມອຸປະກອນສ້າງວິດຖ່າຍໃຫ້ກັບປະຊາຊົນເຊັ່ນ: ທໍ່ໃສ່ວິດ, ຫົວວິດຖ່າຍ; ບັນຫາຢາເສບຕິດເຂດບ້ານສີບມີ່ເຫັນວ່າຍັງຫຼາຍເຮັດໃຫ້ບ້ານບໍ່ມີຄວາມສະຫງົບ, ເກີດມີການຂີ້ລັກງັດແງະ; ໃນການປະຕິບັດໜ້າທີ່ຂອງປກສທີ່ຈັບເປົ້າໝາຍແຕ່ເອົາເຄື່ອງຂອງປະຊາຊົນເຊັ່ນ: ຈັກສະຕິນ ແລະ ຕູ້ໄຟຟ້າ, ຖືກຫຼືບໍ່?

ບ້ານຫ້ວຍຈັງ: ຂໍໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊ່ວຍເຈາະນ້ຳບາດານຕື່ມ ເພາະວ່ານ້ຳໃຊ້ບໍ່ພຽງພໍໃນລະດູແລ້ງ, ສ້ອມແປງທາງເຂົ້າບ້ານໃຫ້ສະດວກໃນການໄປມາຂອງປະຊາຊົນ, ການມາປະຈຳການບໍ່ເປັນປົກກະຕິຂອງຄູສອນໂຮງຮຽນປະຖົມ ເຮັດໃຫ້ເດັກນ້ອຍຂາດຮຽນ.

ບ້ານນາຫົວນ້ຳ: ຂໍນ້ຳບາດານ ເພາະວ່າປະຊາຊົນຂາດນ້ຳໃຊ້, ສ້າງຂົວຂ້າມເຊ, ຊ່ວຍສ້ອມແປງເສັ້ນທາງລະຫວ່າງບ້ານນາຫົວນ້ຳ-ບ້ານລະອໍ, ຂໍໂທລະໂຄ່ງເພີ່ມ 3 ໜ່ວຍ ແລະ ເຮືອຈັກເພື່ອສະດວກໃນການເຄື່ອນຍ້າຍປະຊາຊົນເວລານ້ຳຖ້ວມ, ໃຫ້ທາງວິຊາການກະສິກຳຊ່ວຍຊຸກຍູ້ຕື່ມໃນການປູກ-ການລ້ຽງ, ການສຶກສາເດັກປະຖົມພາຍໃນບ້ານເຫັນວ່າຍັງຕ່ຳ, ຄູສອນກໍມາບໍ່ເປັນປົກກະຕິ, ຂໍໄຟຟ້າເຂົ້າໂຮງຮຽນປະຖົມ, ເລື່ອງເຂດແດນລະຫວ່າງບ້ານຕໍ່ບ້ານເຊັ່ນ: ບ້ານລະອໍກັບບ້ານທ່າເມະ, ຜູ້ທີ່ຮຽນຈົບວິຊາຊີບແລ້ວ ບໍ່ມີຕົວເລກລັດຖະກອນເຂົ້າເຮັດວຽກນຳລັດ;

ບ້ານແກ້ງກີ: ຂໍໄຟຟ້າເຂົ້າໂຮງຮຽນປະຖົມ.

ເມືອງເຊໂປນ ມີປະຊາກອນທີ່ມີອາຍຸແຕ່ 18 ປີຂຶ້ນໄປທີ່ມີສິດປ່ອນບັດເລືອກຕັ້ງ ຈຳນວນ 40,874 ຄົນ ເປັນ ຍິງ 20,486 ຄົນ.

**(ນາງ ມະນີຂັນ)**

# ຕິດຕາມຄວາມຄືບໜ້າການກໍ່ສ້າງເສັ້ນທາງ ແລະ ມອບເຄື່ອງຊ່ວຍເຫຼືອໂຮງໝໍແຂວງ



(ສພຂ)-ວັນທີ 13 ກຸມພາຜ່ານມາ, ທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາຄວາມຄືບໜ້າຂອງການກໍ່ສ້າງເສັ້ນທາງແຕ່ບ້ານຕັງຫວາຍນໍ້າຫາບ້ານໜອງສອງຫ້ອງ ເມືອງຊົນນະບູລີ ເພື່ອເບິ່ງພື້ນທີ່ຕົວຈິງຂອງການກໍ່ສ້າງ ພ້ອມທັງສອບຖາມເຖິງຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການດຳເນີນການກໍ່ສ້າງໃນໄລຍະຜ່ານມາໂດຍສັງເຂບຈາກຜູ້ຮັບເໝົາ.

ບໍລິສັດ ລາວມຸງຄຸນ ກໍ່ສ້າງຂົວ-ທາງ ຈຳກັດຜູ້ດຽວ ໄດ້ລາຍງານໃຫ້ຮູ້ວ່າ: ໂຄງການດັ່ງກ່າວ ແມ່ນການກໍ່ສ້າງເສັ້ນທາງດິນແດງ ມີລວງຍາວ 23 ກິໂລແມັດ ເຊິ່ງເລີ່ມກໍ່ສ້າງແຕ່ວັນທີ 15 ພະຈິກ 2024, ມາຮອດປັດຈຸບັນ ສຳເລັດແລ້ວ 70% ແລະ ຄາດວ່າການກໍ່ສ້າງຈະສຳເລັດຕາມແຜນການທີ່ວາງໄວ້; ຖ້າຫາກເສັ້ນທາງດັ່ງກ່າວສຳເລັດ, ຈະເປັນເງື່ອນໄຂອັນດີໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນກວ່າເກົ່າ. ພ້ອມດຽວກັນນີ້, ຍັງໄດ້ຕິດຕາມເບິ່ງໂຄງການກໍ່ສ້າງເສັ້ນທາງແຕ່ບ້ານຄຳປ່າແໜ ເມືອງຊົນນະບູລີຫາບ້ານຕາແຫຼວເມືອງຈຳພອນ.

ກ່ອນໜ້ານັ້ນຄືວັນທີ 07 ກຸມພາ, ທ່ານ ກົງແກ້ວ ມີວໍລະຈັກ ແລະ ທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ມອບເຄື່ອງຊ່ວຍເຫຼືອໃຫ້ແກ່ໂຮງໝໍແຂວງສະຫວັນນະເຂດ ປະກອບມີໝອນ 600 ໜ່ວຍ ແລະ ເຂົ້າສານ 400 ກິໂລ ເພື່ອຊຸກຍູ້ສົ່ງເສີມວຽກງານສາທາລະນະສຸກ ກໍຄືແພດ, ພະຍາບານທີ່ໃຫ້ການບໍລິການ ແລະ ຄົນເຈັບທີ່ມາປິ່ນປົວຢູ່ໂຮງໝໍ; ຕາງໜ້າຮັບໂດຍທ່ານ ດຣ. ຈັນທະລາ ພາມີສິດ ຜູ້ອຳນວຍການໂຮງໝໍແຂວງ.

**(ນາງຄອນສະຫວັນເມກສະຫວັນ)**

# ກອງປະຊຸມປະຈຳປີ 2024 ຄະນະເລຂາທິການ ສພຂ ສາລະວັນ



(ສພຂ) - ວັນພະຫັດທີ 13 ກຸມພາຜ່ານມາ ທີ່ສະໂມສອນເມືອງສາລະວັນ, ຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຮອບດ້ານ ປະຈຳປີ 2024 ແລະທິດທາງແຜນການປີ 2025 ພາຍໃຕ້ການເປັນປະທານຂອງທ່ານ ສົມພອນ ແສງສຸລິຈັນ ເລຂາທິການສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມໂອ້ລົມຂອງທ່ານ ສີເຮັ້ງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະ ຊາຊົນແຂວງ ເຊິ່ງມີບັນດາທ່ານຄະນະປະຈຳ, ຮອງປະທານຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກການ ແລະອົງການທຽບເທົ່າອ້ອມຂ້າງແຂວງ ພ້ອມດ້ວຍຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານ-ລັດຖະກອນພາຍໃນ ສພຂ ແລະ ຜູ້ຊ່ວຍວຽກສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງແມ່ນເພື່ອສະຫຼຸບຕີລາຄາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕະຫຼອດໄລຍະ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການເຄື່ອນໄຫວປະຈຳປີ 2025 ຂອງຄະນະເລຂາທິການ ໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງໃນວຽກງານຄົ້ນຄວ້າ-ສັງລວມເນື້ອໃນຮອບດ້ານ, ສ້າງສິ່ງອຳນວຍຄວາມສະດວກ, ຄຸ້ມຄອງວຽກງານບໍລິຫານ, ແຜນການແລະການເງິນ, ຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານຂອງ ສພຂ; ພ້ອມທັງຍົກໃຫ້ເຫັນດ້ານຜົນສຳເລັດ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນຖອດຖອນໄດ້, ການປະສານສົມທົບລະຫວ່າງຄະນະເລຂາທິການກັບບັນດາຄະນະກຳມະການຂອງ ສພຂ, ພະແນກການ/ອົງການທຽບເທົ່າຂອງແຂວງ, ເມືອງແນໃສ່ເຮັດໃຫ້ການປັບປຸງແກ້ໄຂວຽກງານຂອງຄະນະເລຂາທິການນັບມື້ດີຂຶ້ນ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງສາລະວັນ ປະຈຳປີ 2024 ແລະແຜນການປະຈຳປີ 2025, ເຜີຍແຜ່ຂໍ້ຕົກລົງເພີ່ມຕື່ມວ່າດ້ວຍການປັບປຸງບາງມາດຕາຂອງຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 0012/ກງ, ລົງວັນທີ 3 ມັງກອນ 2025 ແລະຄຳແນະນຳສະບັບເລກທີ 4524/ກງ, ລົງວັນທີ 13 ທັນວາ 2024 ວ່າດ້ວຍການປັບປຸງເງິນອຸດໜູນແລະເງິນນະໂຍບາຍຕ່າງໆ; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສຸມໃສ່ຄົ້ນຄວ້າ, ຕີລາຄາ, ແລກປ່ຽນບົດຮຽນ ເພື່ອນຳໄປປັບປຸງຈຸດຂາດຕົກບົກຜ່ອງ ແລະ ແກ້ໄຂວຽກງານໃນຕໍ່ໜ້າຂອງຄະນະເລຂາທິການສະພາປະຊາຊົນແຂວງ ໃຫ້ນັບມື້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

**(ດີລຳພົນ ພົມມະຈັນ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ບັນດາສະຫາຍກຳມະການປະຈຳ ແລະ ກຳມະການໃນຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມຂຶ້ນໄປເຂົ້າຮ່ວມຫຼາຍກວ່າ 120 ສະຫາຍ.

ຈຸດປະສົງແມ່ນເພື່ອສະຫຼຸບຕີລາຄາການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ປະຈຳປີ 2024 ແລະ ວາງທິດທາງແຜນການເຄື່ອນໄຫວປະຈຳປີ 2025; ສ້າງເງື່ອນໄຂໃຫ້ບັນດາຮາກຖານພັກ ໄດ້ຄົ້ນຄວ້າປະກອບຄຳເຫັນຕໍ່ການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະພັກສະພາແຫ່ງຊາດໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ; ເປີດບັ້ນດຳເນີນຊີວິດການເມືອງປະຈຳປີ 2024 ພາຍໃນຄະນະພັກສະພາແຫ່ງຊາດ ທັງເປັນການເຜີຍແຜ່, ເຊື່ອມຊຶມເນື້ອໃນມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 9 ສະໄໝທີ XI ເຮັດໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງ ໄດ້ຮັບຮູ້, ເຂົ້າໃຈ, ເຊື່ອມຊຶມ ແລະ ກຳແໜ້ນຢ່າງເລິກເຊິ່ງ, ມີຄວາມເປັນເອກະພາບສູງຕໍ່ເນື້ອໃນຈິດໃຈ ແລະ ດຳເນີນການຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ. ພ້ອມກັນນັ້ນ, ກໍເພື່ອວາງຄາດໝາຍສູ້ຊົນໃຫ້ບັນດາຮາກຖານພັກ ຕ້ອງໄດ້ບຸກບືນໃນການຊີ້ນຳການເຄື່ອນໄຫວວຽກງານວິຊາສະເພາະ ແລະ ສ້າງໜ່ວຍພັກຕົນໃຫ້ກາຍເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ມີຄຸນນະພາບຫຼາຍຂຶ້ນກວ່າເກົ່າ ທັງເປັນການສຶກສາອົບຮົມການເມືອງ-ແນວຄິດ, ຍູ້ແຮງຂະບວນການເຄື່ອນໄຫວວຽກງານຂອງບັນດາຮາກຖານພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ ໃຫ້ພ້ອມການເພີ່ມທະວີຄວາມຮັບຜິດຊອບ, ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໃຫ້ມີບາດກ້າວຂະຫຍາຍຕົວຂຶ້ນເລື້ອຍໆ.

ກອງປະຊຸມໄດ້ຜ່ານບົດສະຫຼຸບການເຄື່ອນໄຫວນຳພາ-ຊີ້ນຳຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2025; ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຕາມການເຈາະຈີ້ມແລະໃຫ້ທິດຊີ້ນຳຂອງປະທານກອງປະຊຸມ.

ຕອນບ່າຍຂອງວັນດຽວກັນ, ໄດ້ມີການແບ່ງຈຸດຳເນີນຊີວິດການເມືອງເພື່ອຜ່ານບົດສຳຫຼວດບຸກຄົນພາຍໃນຄະນະບໍລິຫານງານພັກສະພາແຫ່ງຊາດໂດຍແບ່ງເປັນ 6 ຈຸ.

# ບໍລິສັດ GIANTLAO ມອບເຄື່ອງໃຫ້ ສພຂ ສາລະວັນ




(ສພຂ) - ຕອນເຊົ້າວັນທີ 7 ກຸມພາຜ່ານມາ, ທ່ານ ສີສົມພອນ ພະສະຫວັດ ປະທານບໍລິສັດ GIANTLAO ພ້ອມດ້ວຍຄະນະ ໄດ້ມອບເຄື່ອງຊ່ວຍເຫຼືອປະເພດເຄື່ອງອຸປະໂພກ (ເຄື່ອງນຸ່ງຫົ່ມ, ອຸປະກອນການຮຽນ, ເຄື່ອງຫຼິ້ນກິລາ), ເຄື່ອງບໍລິໂພກ (ໝີ່, ເຂົ້າໜົມ) ລວມມູນຄ່າ 40 ລ້ານກີບ ໃຫ້ແກ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ; ກ່າວຮັບໂດຍ ທ່ານ ສີເຮັ້ງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ສາລະວັນ ເຊິ່ງມີທ່ານຮອງປະທານສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງການຂອງ ສພຂ ເຂົ້າຮ່ວມເປັນສັກຂີພະຍານ; ໃນພິທີມອບ-ຮັບ, ທ່ານ ສີເຮັ້ງ ຫອມສົມບັດ ໄດ້ກ່າວສະແດງຄວາມຂອບໃຈເປັນຢ່າງສູງ ແລະມອບໃບຍ້ອງຍໍໃຫ້ບໍລິສັດ GIANTLAO ທີ່ມີຜົນງານປະກອບສ່ວນຊ່ວຍເຫຼືອສັງຄົມ ແລະສັນລະເສີນຄຸນງາມຄວາມດີນີ້ໄວ້ໃນປຶ້ມປະຫວັດສາດຂອງສະພາປະຊາຊົນແຂວງສາລະວັນ.

ເຄື່ອງຈຳນວນດັ່ງກ່າວ ຈະນຳໄປມອບຕໍ່ໃຫ້ແກ່ນ້ອງນັກຮຽນຢູ່ໂຮງຮຽນຕ່າງໆຂອງເມືອງທີ່ຂາດແຄນອຸປະກອນການຮຽນ-ການສອນ ເພື່ອຊຸກຍູ້ສົ່ງເສີມໃຫ້ເດັກເຫັນໄດ້ຄວາມສຳຄັນຂອງການສຶກສາຮ່ຳຮຽນ.

**(ດີລຳພົນ ພົມພະຈັນ)**

# ສະຫຼຸບການເຄື່ອນໄຫວວຽກງານ ຂອງຄະນະເລຂາທິການ ສພຂ ອັດຕະປື




(ສພຂ) - ກອງປະຊຸມປະຈຳປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດຂຶ້ນໃນວັນທີ 14 ກຸມພາ 2025 ໂດຍການເປັນປະທານຮ່ວມຂອງທ່ານນາງ ມີນາພອນ ໄຊສີມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ແລະທ່ານ ນາງ ແສງອາລຸນ ວົງສາທິການ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ-ລັດຖະກອນ ພາຍໃນ ສພຂ ແລະ ຕາງໜ້າຫ້ອງວ່າການປົກຄອງແຂວງ; ທັງນີ້, ກໍເພື່ອສະຫຼຸບຕີລາຄາການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຕະຫຼອດໄລຍະ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການເຄື່ອນໄຫວປະຈຳປີ 2025 ພ້ອມທັງຍົກໃຫ້ເຫັນດ້ານຜົນສຳເລັດ, ຂໍ້ຄົງຄ້າງ, ສາເຫດແລະບົດຮຽນຖອດຖອນໄດ້ ແນໃສ່ເຮັດໃຫ້ການປັບປຸງແກ້ໄຂວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງນັບມື້ດີຂຶ້ນກວ່າເກົ່າ.

ກອງປະຊຸມໄດ້ຮັບຟັງບົດລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະທິດທາງແຜນການປະຈຳປີ 2025 ຂອງຄະນະເລຂາທິການສະພາປະຊາຊົນແຂວງໃນນາມກົງຈັກການຈັດຕັ້ງທີ່ມີພາລະບົດບາດເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສພຂ, ຄະນະປະຈຳ ແລະ ຄະນະສະມາຊິກສະພາແຫ່ງຊາດ(ສສຊ) ປະຈຳເຂດເລືອກຕັ້ງທີ 17 ເຊິ່ງສາມາດຈັດຕັ້ງປະຕິບັດວຽກງານມີຜົນສຳເລັດເປັນຢ່າງດີສະແດງອອກໃນການເປັນເສນາທິການກະກຽມວຽກງານຮອບດ້ານເປັນຕົ້ນ: ວຽກງານຄົ້ນຄວ້າ-ສັງລວມດ້ານເນື້ອໃນຮັບໃຊ້ກອງປະຊຸມສະໄໝສາມັນ, ວຽກງານຄະນະປະຈຳ, ວຽກງານ ສສຊ ປະຈຳເຂດເລືອກຕັ້ງ, ການຄຸ້ມຄອງວຽກງານຂໍ້ມູນຂ່າວສານ ແລະ ໄອທີ, ວຽກງານຫ້ອງສະໝຸດ, ການຄຸ້ມຄອງວຽກງານຈັດຕັ້ງ-ກວດກາ, ການຄຸ້ມຄອງວຽກງານບໍລິຫານ-ການເງິນ ແລະ ວຽກງານການຕ່າງປະເທດ; ຄຽງຄູ່ກັບຜົນສຳເລັດໃນ 1 ປີຜ່ານມາ, ກໍຍັງພົບກັບຄວາມຫຍຸ້ງຍາກສິ່ງທ້າທາຍຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃນຊຸມປີຕໍ່ໜ້າ ເປັນຕົ້ນ: ການສຶກສາອົບຮົມການເມືອງ-ແນວຄິດ ບໍ່ທັນຕິດພັນກັບການແກ້ໄຂບັນຫາຕົວຈິງ, ການປະສານວຽກງານຈຳນວນໜຶ່ງຍັງບໍ່ທັນໂລ່ງລ່ຽນ, ການເຮັດໜ້າທີ່ເປັນເສນາທິການໃຫ້ແກ່ການຄົ້ນຄວ້າເນື້ອໃນຍັງບໍ່ທັນໄດ້ດີ, ການສະໜອງອຸປະກອນຮັບໃຊ້ວຽກງານຕ່າງໆຍັງບໍ່ທັນຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການເທົ່າທີ່ຄວນ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ສຸມໃສ່ຄົ້ນຄວ້າ, ຕີລາຄາ, ແລກປ່ຽນບົດຮຽນ ແລະ ປະກອບຄຳເຫັນໃສ່ບັນດາເນື້ອໃນທີ່ໄດ້ນຳເຂົ້າມາປຶກສາຫາລືເພື່ອຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດແລະສະເໜີວິທີການແກ້ໄຂຢ່າງກົງໄປກົງມາ ເຊິ່ງຈະເປັນຂໍ້ມູນນຳໄປປັບປຸງ, ແກ້ໄຂວຽກງານໃນຕໍ່ໜ້າ.

ທ່ານ ນາງ ມີນາພອນ ໄຊສີມພູ ໄດ້ມີຄຳເຫັນໂອ້ລົມ ໂດຍສະແດງຄວາມຍ້ອງຍໍຊົມເຊີຍຄະນະເລຂາທິການແລະພະນັກງານ ທີ່ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ, ເຖິງແມ່ນວ່າຈະພົບກັບຄວາມຫຍຸ້ງຍາກສິ່ງທ້າທາຍຈຳນວນໜຶ່ງ ກໍສາມາດຍາດໄດ້ຜົນສຳເລັດໃນຫຼາຍໆດ້ານ. ຄຽງຄູ່ກັບຜົນສຳເລັດ, ຍັງຈະຕ້ອງໄດ້ເອົາໃຈໃສ່ສືບຕໍ່ເພີ່ມທະວີໃຫ້ທັນກັບການປ່ຽນແປງໃນໄລຍະໃໝ່; ບຳລຸງຍົກລະດັບ, ສ້າງ ແລະ ສຶກສາອົບຮົມນຳພາການເມືອງ-ແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນໃຫ້ຕໍ່ເນື່ອງ, ທົ່ວເຖິງ ແລະ ທັນການ; ປັບປຸງກົງຈັກການຈັດຕັ້ງ, ກົນໄກ, ແບບແຜນວິທີເຮັດວຽກ, ສົ່ງເສີມຄວາມເປັນເຈົ້າການແລະມີຫົວຄິດປະດິດສ້າງ, ປັບປຸງແລະຍົກລະດັບການເປັນເສນາທິການຕາມພາລະບົດບາດ, ສິດ ແລະ ໜ້າທີ່ທີ່ກົດໝາຍໄດ້ກຳນົດໄວ້ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ການເມືອງຂອງຄະນະເລຂາທິການສະພາປະຊາຊົນແຂວງ ມີປະສິດທິພາບດີຂຶ້ນກວ່າເກົ່າ.

**(ວິມັດ ສີສຸລາດ)**




# ຄະນະເລຂາທິການ ສພຂ ໄຊສົມບູນ ສະຫຼຸບວຽກງານປະຈຳປີ 2024



(ສພຂ) - ກອງປະຊຸມສະຫຼຸບວຽກງານປະຈຳປີ2024 ແລະ ວາງທິດທາງແຜນການປະຈຳປີ 2025 ຂອງຄະນະເລຂາທິການສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ຈັດຂຶ້ນເມື່ອວັນທີ 14 ກຸມພານີ້ ທີ່ສະໂມສອນເມືອງອະນຸວົງ ໂດຍການເປັນປະທານຮ່ວມຂອງທ່ານແດງ ປະທຸມທອງ ປະທານສະພາປະຊາຊົນແຂວງ ແລະ ທ່ານ ບີເຣີ ຮອງເລຂາທິການສະພາປະຊາຊົນແຂວງ, ເຂົ້າຮ່ວມມີຮອງປະທານ ແລະຮອງເລຂາທິການຕະຫຼອດຮອດຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ເຊິ່ງໃນໄລຍະ 1 ປີຜ່ານມາ ຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຢ່າງຕັ້ງໜ້າ ໂດຍສະເພາະການນຳພາ-ຊີ້ນຳໃນການສຶກສາອົບຮົມທາງດ້ານການເມືອງໃຫ້ແກ່ພະນັກງານ-ລັດຖະກອນ ເປັນຕົ້ນແມ່ນການເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ແຈ້ງການ; ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ນິຕິກຳຕ່າງໆເປັນປົກກະຕິ ເພື່ອຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນເສນາທິການຂອງຕົນໃຫ້ມີປະສິດທິພາບດີຂຶ້ນກວ່າເກົ່າ. ພ້ອມດຽວກັນນີ້, ປະທານກອງປະຊຸມໄດ້ເຈາະຈີ້ມ ແລະ ໃຫ້ທິດໃນການປະກອບຄຳເຫັນຕໍ່ຮ່າງບົດສະຫຼຸບ, ຈາກນັ້ນ ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນຕອບຄຳຖາມເຈາະຈີ້ມ ທັງປະກອບຄຳຄິດຄຳເຫັນເພື່ອເຮັດໃຫ້ບົດສະຫຼຸບດັ່ງກ່າວມີເນື້ອໃນຄົບຖ້ວນ ແລະ ສົມບູນ.

ກອງປະຊຸມຄັ້ງນີ້, ຍັງໄດ້ມີການມອບໃບຍ້ອງຍໍຂອງທ່ານເຈົ້າແຂວງໆໄຊສົມບູນ ແລະ ທ່ານປະທານສະພາປະຊາຊົນແຂວງ ໃຫ້ແກ່ຜູ້ທີ່ມີຜົນງານດີເດັ່ນໃນການປົກປັກຮັກສາແລະສ້າງສາປະເທດຊາດ ກໍຄືແຂວງໄຊສົມບູນ ປະຈຳ ປີ 2024.

ທ່ານ ແດງ ປະທຸມທອງ ໄດ້ສະແດງຄວາມຊົມເຊີຍຕໍ່ຄະນະເລຂາທິການສະພາປະຊາຊົນແຂວງ ທີ່ມີຄວາມບຸກບືນ, ເອົາໃຈໃສ່ຕໍ່ວຽກງານເຮັດໃຫ້ມີຜົນສຳເລັດຫຼາຍດ້ານ; ເນັ້ນໜັກໃຫ້ສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດພະນັກງານ-ລັດຖະກອນ ພ້ອມທັງເປັນແບບຢ່າງທີ່ດີໃຫ້ແກ່ພະນັກງານ, ສືບຕໍ່ຈັດຕັ້ງປະຕິບັດວຽກງານວິຊາສະເພາະຕາມພາລະບົດບາດຂອງຕົນໃຫ້ດີຂຶ້ນກວ່າເກົ່າ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ສສຊ-ສສຂ ເຄື່ອນໄຫວຢ້ຽມຢາມ ພົບປະຜູ້ມີສິດເລືອກຕັ້ງທີ່ເມືອງທ່າໂທມ



(ສພຂ) - ວັນທີ 3-7 ກຸມພາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 18 ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄຊສົມບູນ ນຳໂດຍທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II ຢູ່ 26 ບ້ານ 7 ຈຸດ ແລະ ອົງການປົກຄອງເມືອງທ່າໂທມ ໂດຍໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາເສດຖະກິດຂອງແຕ່ລະກຸ່ມບ້ານ; ຈາກນັ້ນ, ໄດ້ແລກປ່ຽນຄຳຄິດຄຳເຫັນ, ຄຳສະເໜີ ແລະ ຂໍ້ຂັດຂ້ອງໝອງໃຈ ເຊິ່ງຄຳສະເໜີສ່ວນຫຼາຍແມ່ນຕິດພັນກັບການພັດທະນາພື້ນຖານໂຄງລ່າງທີ່ຕິດພັນກັບການດຳລົງຊີວິດ ເປັນຕົ້ນໄຟຟ້າ, ນ້ຳປະປາ, ໂຮງຮຽນໃນຊົນນະບົດຊຸດໂຊມ ແລະ ເປ່ເພ່ເປັນສ່ວນຫຼາຍ, ພະນັກງານອາສາສະໝັກ, ເສັ້ນທາງ.

ພ້ອມກັນນັ້ນ, ສສຊ-ສສຂ ໄດ້ນຳເອົາເຄື່ອງນຸ່ງຫົ່ມຈຳນວນໜຶ່ງມອບໃຫ້ແກ່ຄອບຄົວຜູ້ທຸກຍາກອີກດ້ວຍ.

**(ນາງ ອຳໄພພອນ ແກ້ວວິໄລ)**




# ຄວາມຜິດພາດ ບໍ່ແມ່ນຄວາມຊົ່ວ

\# ດົ້ນກົບເມກ

ບົດນີ້ ຜູ້ຂຽນພະຍາຍາມສຶກສາຄຳເວົ້າຜູ້ນຳລາວທີ່ເຄີຍສັ່ງສອນໃຫ້ຂໍ້ຄິດທັງໃນຊີວິດສ່ວນຕົວ ແລະ ສ່ວນລວມ ໃນໜ້າວຽກຕົວຈິງ ເຊິ່ງຕັ້ງຫົວຂໍ້ບົດຂ້າງເທິງໄວ້ນັ້ນ ກໍແມ່ນຄຳເວົ້າຂອງປະທານ ສຸພານຸວົງ ປະທານປະເທດຜູ້ທຳອິດຂອງ ສປປລາວ, ປະທານສະພາປະຊາຊົນສູງສຸດ ຊຸດທີ I ທີ່ໄດ້ເວົ້າເປັນເນື້ອໃນຄົບຖ້ວນໄວ້ວ່າ: ເມື່ອເວົ້າແລ້ວ ກໍຕ້ອງເຮັດໃຫ້ສຸດ ຂຸດໃຫ້ເຖິງ ຜິດຖືກຄ່ອຍວ່າກັນ ອັນໃດດີສິ່ງເສີມມັນຂຶ້ນມາ ອັນໃດບໍ່ດີຕ້ອງແກ້ໄຂ...; ປະທານ ສຸພານຸວົງ ຍັງເວົ້າຕື່ມວ່າ: ທັງເຮັດທັງຮຽນຮູ້ໄປນຳຄວາມຜິດພາດ ບໍ່ແມ່ນຄວາມຊົ່ວ ຄວາມຊົ່ວຄືການເຮັດຜິດແລ້ວບໍ່ປ່ຽນແປງ...! ຄຳເວົ້າເປັນຄະຕິເຕືອນໃຈໃຫ້ບົດຮຽນໃນການປະຕິບັດໜ້າທີ່ເພື່ອສັງຄົມ-ຊາດບ້ານເມືອງນັ້ນ ຜູ້ຂຽນເຂົ້າໃຈວ່າ: ມັນເປັນຄືແວ່ນແຍງມີຄ່າສູງ, ສາມາດເອົາມາທວນຄືນ ແຍງໃສ່ພຶດຕິກຳການປະຕິບັດໜ້າທີ່ວຽກງານໃນກົງຈັກການຈັດຕັ້ງຕົວຈິງ ເວົ້າສະເພາະກໍແມ່ນບຸກຄົນທີ່ມີໜ້າທີ່ຮັບຜິດຊອບສູງ-ຮັບຜິດຊອບລວມໝູ່ ຍິ່ງໄດ້ເປີດໃຈກວ້າງຟັງຄຳຄິດເຫັນຫຼາຍຝ່າຍ ເພື່ອກັ່ນຕອງເອົາມາປັບປຸງໃສ່ພຶດຕິກຳວ່າ ອັນໃດຖືກກໍສິ່ງເສີມຂຶ້ນມາ ອັນໃດບໍ່ດີກໍຕ້ອງກ້າປ່ຽນ ແກ້ໄຂບໍ່ປະແຊ່ໄວ້ໃຫ້ກາຍເປັນພະຍາດຊຳເຮື້ອປົວບໍ່ເຊົາ ມີແຕ່ສິ່ງຜົນເສຍຫາຍ.

ຄຳເວົ້າຂອງປະທານ ສຸພານຸວົງ ທີ່ເວົ້າວ່າ: ຄວາມຜິດພາດບໍ່ແມ່ນຄວາມຊົ່ວ ແຕ່ຄວາມຊົ່ວຄືການເຮັດຜິດແລ້ວບໍ່ປ່ຽນແປງ... ຄຳເວົ້າດັ່ງກ່າວພາໃຫ້ຜູ້ຂຽນຄິດເຫັນຄຳສອນທາງພຸດທະສາສະໜາທີ່ສອນວ່າ: ຜູ້ທີ່ຍັງຮູ້ວ່າໂຕເອງໂງ່ ກໍຍັງສາມາດພັດທະນາຕົນເອງເປັນນັກປາດບັນດິດໄດ້, ແຕ່ຜູ້ທີ່ຖືໂຕເອງວ່າສະຫຼາດ ບໍ່ຮູ້ວ່າໂຕເອງໂງ່ ຜູ້ນັ້ນແມ່ນຄົນໂງ່ແທ້.

ສັງລວມໄດ້ວ່າ: ຄຳເວົ້າຂອງປະທານ ສຸພານຸວົງ ທີ່ເວົ້າວ່າ: ຜິດພາດບໍ່ແມ່ນຄວາມຊົ່ວຮ້າຍ ແຕ່ຄວາມຊົ່ວແທ້ຈິງຄືການເຮັດຜິດແລ້ວບໍ່ປ່ຽນແປງ, ເປັນຄະຕິຄຳເວົ້າຍາມໃດກໍຍັງສ່ອງແສງໃສ່ພຶດຕິກຳຕົວຈິງຂອງຄົນໃນສັງຄົມໄດ້ສະເໝີຂໍແຕ່ວ່າເຮົາເປີດໃຈຍອມຮັບປ່ຽນແປງໃຫ້ດີຂຶ້ນ.






# ບໍ່ເຫັນເທວະດາ

\# ຫຼານເຈົ້ານ້ອຍ

❊ ຮຽມຂີ່ຍົນເວີ່ນຟ້າ    ເໜືອເມກໂບຍບິນ
ບໍ່ເຫັນອິງອິນແຖນ    ເທບເທວາບິນຟ້າ
ເຫັນແຕ່ເມຄາຍ້າຍ    ກອງກັນເປັນປ່ຽງ
ເຫັນພຽງຍົນເຄື່ອນຍ້າຍ    ເທິງຟ້າສວ່າງສົມ

❊ ຂີ່ຍົນຊົມສ່ອງສິ້ງ    ຫຼຽວລ່ຳແລມອງ
ສ່ອງເຫັນຊຸມມອນແມງ    ມອດກຸມກິນໄມ້
ໄພພະນາຫຼາຍໜ້ອງ    ມອງເຫັນເປັນບ່ອນ
ໄມ້ກອງກັນກ່າຍຂຶ້ນ    ສູງເທົ່າທຽບພູ

❊ ເຫັນມົດຄານຄືບເຂົ້າ    ໃນປ່າລຳລຽງ
ສຽງແຊວງເປັນຂະບວນ    ແກ່ເຝືອນຂົນຍ້າຍ
ປວກທັງຫຼາຍກຸມແຫ້ນ    ໃນດິນກິນຮາກ
ໄມ້ໝາກເລີຍລ່າວລົ້ມ    ລົງພື້ນບໍ່ຍັງ

❊ ຟັງຍິນລີງຄ່າງຮ້ອງ    ຊີງປວດເປັນໂຊ
ຊຸມໂຕສິງເສືອເມີຍ    ທອດຫົວກະຫາຍນ້ຳ
ພ້ອມພໍ່ພາກັນຍ້າຍ    ໂຊເຊຊີງເມື່ອຍ
ທັງເໝີຍໝີຮ່ຳຮ້ອງ    ຄາງໄຫ້ຈິ່ມຈາ

❊ ສັກກູນາພວກຜູ້    ມີປີກຍັນແຄນ
ຍັງແອ່ນບິນໂບຍໜີ    ຮ່າຍຄອນເມືອໜ້າ
ພວກປູປາໃນນ້ຳ    ລຳທານກາງປ່າ
ກໍເລີ່ມຫິວທອດໄສ້    ເພາະດອນດົງຂາດໄມ້    ເຄີຍອູ້ມໂອບອາໄປ

❊ ພວກຜູ້ຄົນໂຫ່ຮ້ອງ    ກູມດ່າເທວະດາ
ເພາະຂາດຝົນທຳນາ    ດັ່ງເດີມດາເຄົ້າ
ເຂົ້າໃນເຍຍແຮໄວ້    ພຽງສອງສາມກະຕ່າ
ເຂົ້າໝ່າກໍເລີ່ມໜ້ອຍ    ຈຶ່ງລົງລາຍດ່າປ໋ອຍ    ແຖນໄທ້ເທບພະອິນ ໝ່າຍເດ!




# ວິທີເຮັດວຽກ

**ພາກທີ 7 ບັນຫາພະນັກງານ**

**2. ການສອນພະນັກງານ ແລະ ໃຊ້ພະນັກງານ:**

ວຽກການຈະເຮັດໄດ້ຜົນ ຫຼື ປະລາໄຊ ແມ່ນເປັນນຳພະນັກງານຈະດີ ຫຼື ບໍ່ດີ. ເພາະສະນັ້ນ, ພັກຈຶ່ງຕ້ອງບຳລຸງສັ່ງສອນພະນັກງານເໝືອນດັ່ງຄົນເຮັດສວນ ໃສ່ຝຸ່ນຖົມກົກຕົ້ນໄມ້ທີ່ມີຄ່າ ຕ້ອງນັບຖືຄວາມສາມາດຂອງຄົນ, ນັບຖືພະນັກງານ ນັບຖືໝົດທຸກຄົນທີ່ມີປະໂຫຍດແກ່ວຽກງານສ່ວນລວມຂອງພວກເຮົາ.

ພັກເຮົາແມ່ນອົງຄະນະອັນໜຶ່ງທີ່ເຮັດການປະຕິວັດ, ໃນການຕໍ່ສູ້ນັ້ນ ມັກເຄີຍສູນເສຍພະນັກງານຜູ້ປະເສີດຈຳນວນໜຶ່ງ, ເພາະສະນັ້ນ ພວກເຮົາຍິ່ງຕ້ອງຮັກແພງພະນັກງານ, ຕ້ອງປົກປັກຮັກສາພະນັກງານເກົ່າ ແລະ ສ້າງພະນັກງານໃໝ່. ແນວໂຮມແຫ່ງຊາດນັບມື້ນັບກວ້າງ, ເປັນເຫດໃຫ້ມີຄົນຂະຫຍັນຫ້າວຫັນປົ່ງຂຶ້ນຕື່ມເປັນຈຳນວນພັນຈຳນວນໝື່ນເຂົ້າພັກຂອງພວກເຮົາ. ຄົນພວກນີ້ຂະຫຍັນຫ້າວຫັນ ແຕ່ວ່າເຂົາເຈົ້າຫາກຍັງບໍ່ທັນມີທິດສະດີພຽງພໍ ບົດຮຽນຍັງມີໜ້ອຍ, ໃນເວລາເຮັດວຽກການຕາມໜ້າທີ່ຂອງເຂົາເຈົ້ານັ້ນເຂົາເຈົ້າມັກເຄີຍພົບບັນຫາໃຫຍ່ຫຼວງຫຼາຍຢ່າງທີ່ເຂົາເຈົ້າແກ້ໄຂເອົາເອງ.ເພາະສະນັ້ນພວກເຮົາຕ້ອງເອົາໃຈໃສ່ຊ່ວຍເຫຼືອອົບຮົມພະນັກງານເຫຼົ່ານັ້ນ,ບັນຫາພະນັກງານຈຶ່ງເປັນບັນຫາສຳຄັນທີ່ສຸດແລະຮີບດ່ວນທີ່ສຸດ.

ກ່ຽວກັບບັນຫາດັ່ງກ່າວນັ້ນ ພັກເຮົາຈະຕ້ອງເຮັດແນວໃດ?

1. ຕ້ອງຮູ້ຈັກພະນັກງານໃຫ້ຄັກ: ແຕ່ກ່ອນມາເຖິງດຽວນີ້ພັກເຮົາຍັງບໍ່ທັນປະຕິບັດການເບິ່ງແຍງ, ພະນັກງານເປັນປົກກະຕິ, ນັ້ນເປັນຂໍ້ບົດພ່ອງໃຫຍ່. ບົດຮຽນບອກໃຫ້ພວກເຮົາຮູ້ວ່າ ເມື່ອພວກກວດກາເບິ່ງຄວາມສາມາດຂອງຄົນນັ້ນດ້ານໜຶ່ງ ພວກເຮົາກໍເຫັນຄົນສາມາດຜູ້ໃໝ່ເກີດຂຶ້ນ ແລະ ອີກດ້ານໜຶ່ງກໍເຫັນຄົນຜູ້ຊົ່ວພົ້ນຂຶ້ນມາຄືກັນ.

2. ຕ້ອງເລື່ອນຊັ້ນພະນັກງານໃຫ້ຖືກ: ການເລື່ອນຊັ້ນພະນັກງານເປັນວຽກການທີ່ຮີບຟ້າວ, ເວລາເລື່ອນຊັ້ນພະນັກງານຜູ້ໜຶ່ງ ຕ້ອງກວດເບິ່ງໃຫ້ຄັກວ່າພະນັກງານຜູ້ນັ້ນໃຊ້ສິດປະຊາທິປະໄຕປະຊາຊົນຫຼືບໍ່? ໄດ້ຮັບຄວາມເຊື່ອຖືຮັກແພງ ແລະ ນັບຖືຂອງປະຊາຊົນຫຼືບໍ່? ນອກຈາກນັ້ນ, ຍັງຕ້ອງກວດເບິ່ງອີກວ່າ ພະນັກງານຜູ້ນັ້ນເໝາະສົມກັບວຽກການອັນໃດ. ພະນັກງານຈະມີຄວາມສາມາດພຽງໃດກໍຕາມ ຖ້າເຮົາຫາກໃຊ້ບໍ່ຖືກກັບຄວາມສາມາດຂອງເຂົາເຈົ້ານັ້ນ ເຂົາເຈົ້າກໍເຮັດວຽກບໍ່ໄດ້ຜົນດີ.

ຖ້າເລື່ອນຊັ້ນບໍ່ເຮັດຄັກແນ່, ໄປເອົາຄົນໂລເລເປັນແຕ່ປາກ ບໍ່ຮູ້ເຮັດວຽກໄປໃສ່ຕຳແໜ່ງ ທີ່ມີໜ້າທີ່ນຳພານັ້ນແມ່ນເປັນການເສຍຫາຍທີ່ສຸດ.

3. ຕ້ອງຊ່າງໃຊ້ພະນັກງານ: ມັນບໍ່ທ່ອນມີຜູ້ໃດຈະຈົບຈະດີໝົດທຸກອັນໂລດ. ເພາະສະນັ້ນ ພວກເຮົາຕ້ອງຊ່າງໃຊ້ຄົນ, ແກ້ໄຂຂໍ້ບົກພ່ອງຂອງເຂົາເຈົ້າ, ຊ່ວຍເຂົາເຈົ້າຂະຫຍາຍຂໍ້ດີຂອງເຂົາເຈົ້າ. ຕາມທຳມະດາພວກເຮົາມັກບໍ່ຊ່າງໃຊ້ຄົນຕາມຄວາມສາມາດຂອງເຂົາເຈົ້າ; ຍົກຕົວຢ່າງ: ມັກໃຊ້ຊ່າງຕີເຫຼັກໄປເຮັດໂຕະ, ເຮັດຕູ້, ມັກໃຊ້ຊ່າງໄມ້ໄປຕີພ້າ, ຕີຂວານ. ເຮັດແນວນັ້ນ ທັງສອງຄົນກໍກະວົນກະວາຍ, ວຽກບໍ່ໄດ້ເຕັມສ່ວນ. ຖ້າພວກເຮົາຊ່າງໃຊ້ຄົນຕາມຄວາມສາມາດຂອງເຂົາເຈົ້ານັ້ນ, ໝົດທຸກຄົນກໍຈະເຮັດວຽກໄດ້ຜົນຫຼາຍ. ອ່ານຕໍ່ສະບັບໜ້າ...



## ສຸກສະບາຍຫາຍໂຣຄາ

# ໂລກ 10 ຊະນິດທີ່ມັກເກີດນຳພະນັກງານຫ້ອງການ

# ຄັດໂດຍ: ທອມສະນິດ



ດ້ວຍໜ້າທີ່ຂອງພະນັກງານຍຸກໃໝ່ ທີ່ຕ້ອງປະເຊີນກັບຄວາມເຄັ່ງຕຶງຈາກການເຮັດວຽກປະຈຳວັນ ເພື່ອສ້າງຖານຄວາມໝັ້ນຄົງໃຫ້ກັບຄອບຄົວ ເຮັດໃຫ້ພະນັກງານສ່ວນໜຶ່ງປ່ອຍປະທີ່ຈະຮັກສາສຸຂະພາບຂອງຕົນເອງ. ພະນັກງານທີ່ເຮັດວຽກໃນຫ້ອງການ ຕ້ອງໃຊ້ເວລາຫຼາຍຊົ່ວໂມງແລະນັ່ງຢູ່ຕໍ່ໜ້າຈໍຄອມພິວເຕີເປັນເວລາດົນນານຫຼືວຸ້ນວາຍຢູ່ກັບເອກະສານທີ່ຕ້ອງພິມຈົນເກືອບບໍ່ໄດ້ອອກຈາກຕັ່ງໄປເຮັດວຽກອື່ນ. ຄວາມເຄັ່ງຕຶງດັ່ງກ່າວຖ້າປ່ອຍໃຫ້ເປັນເລື່ອງປົກກະຕິໄປເລື້ອຍໆສິ່ງທີ່ອາດຕາມມາຄືຄວາມຊຸດໂຊມຂອງຮ່າງກາຍ ແລະ ນຳໄປສູ່ຄວາມສ່ຽງຕໍ່ການຄຸກຄາມດ້ວຍພະຍາດຕ່າງໆເນື່ອງຈາກວ່າຮ່າງກາຍຕ້ອງແບກຮັບກັບຄວາມເຄັ່ງຕຶງໂດຍປາສະຈາກການຜ່ອນຄາຍ.

ໂຣກ 10 ຊະນິດດັ່ງກ່າວປະກອບດ້ວຍ:

**1. ມືຊາ**

ມືຊາ ເປັນການອັກເສບຂອງເອັນຫຸ້ມຂໍ້ມື, ເສັ້ນເອັນນິ້ວມື. ປັດຈຸບັນ, ພະຍາດນີ້ມັກພົບຫຼາຍເນື່ອງຈາກວ່າເທັກໂນໂລຊີເຂົ້າມາມີສ່ວນໃນຊີວິດປະຈຳວັນ ເຊັ່ນ: ການນຳໃຊ້ເຄື່ອງຄອມພິວເຕີ, ການຈັບເມົາໃນທ່າເດີມໆ ແລະເປັນເວລາດົນເຊິ່ງເຮັດໃຫ້ກ້າມເນື້ອກົດທັບເສັ້ນປະສາດ ແລະ ເສັ້ນເອັນຈົນອັກເສບ ເຊິ່ງເຮັດໃຫ້ເກີດອາກາດປວດຂອງປາຍປະສາດນິ້ວມື.

**2. ຕໍ້ຫີນ ແລະ ຕາມົວ**

ໂຣກນີ້ມັກເກີດຂຶ້ນກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ ເຊິ່ງມີຄວາມສ່ຽງສູງໃນການເປັນໂຣກຕໍ້ຫີນ ຫຼືກຳລັງເປັນໂຣກນີ້ໂດຍບໍ່ຮູ້ຕົວ. ຜູ້ທີ່ເປັນໂຣກນີ້ ຖ້າບໍ່ໄດ້ຮັບການປິ່ນປົວຢ່າງຖືກວິທີອາດເຮັດໃຫ້ຕາບອດໄດ້. ສາເຫດຕົ້ນຕໍຂອງໂຣກນີ້ ເກີດຈາກການໃຊ້ສາຍຕາເປັນເວລາດົນໆ. ການອັກເສບ ຫຼື ຕິດເຊື້ອຂອງແກ້ວຕາຈາກການໃຊ້ຄອນແທກເລນ (contact lens); ດັ່ງນັ້ນ, ແຕ່ລະຄົນຄວນກວດສຸຂະພາບຕາທຸກໆ 2 ປີ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງໃນການເກີດໂຣກຕໍ້ຫີນ.

**3. ໝື້ວໃນຖົງນ້ຳບີ**

ໂຣກໝື້ວໃນຖົງນ້ຳບີເກີດຈາກການກິນອາຫານທີ່ມີໄຂມັນສູງເປັນປະຈຳ ໂຣກນີ້ມັກພົບໃນເພດຍິງທີ່ມີອາຍຸ 40 ປີຂຶ້ນໄປ. ຄົນອ້ວນມັກເປັນໂຣກນີ້ຫຼາຍກວ່າຄົນຈ່ອຍ. ນອກຈາກນີ້, ຍັງມີປັດໄຈອື່ນໆທີ່ສົ່ງຜົນໃຫ້ເກີດໂຣກນີ້ເຊັ່ນ: ກຳມະພັນ, ການອັກເສບຂອງຖົງນ້ຳບີ, ການກິນຢາຄຸມກຳເນີດເປັນເວລາດົນ ເມື່ອເປັນໝື້ວໃນຖົງນ້ຳບີແລ້ວ, ຖ້າບໍ່ຟ້າວປິ່ນປົວອາດຈະກໍ່ໃຫ້ເກີດອາການຊຳເຮື້ອຕາມມາອີກດ້ວຍ.

**4. ພົກຍ່ຽວອັກເສບ**

ມັກເກີດກັບຜູ້ທີ່ນັ່ງເຮັດວຽກເປັນເວລາດົນໆ ຫຼື ບຸກຄົນທີ່ມັກເດີນທາງໄກຕ້ອງອົດຖ່າຍເບົາເປັນປະຈຳ ເຊິ່ງເປັນສາເຫດຂອງໂຣກພົກຍ່ຽວອັກເສບ; ໂຣກນີ້ເກີດຈາກເຊື້ອແບກເຕີເຣຍເຂົ້າໄປຕາມທໍ່ພົກຍ່ຽວແລ້ວກໍ່ໃຫ້ເກີດການອັກເສບ ໂຣກນີ້ມັກເກີດນຳເພດຍິງ ຫຼາຍກວ່າເພດຊາຍ.

**5. ອາການເຄັ່ງຄຽດ ແລະ ນອນບໍ່ຫຼັບ**

ມັກເກີດຂຶ້ນກັບຄົນທີ່ເຮັດວຽກ, ບໍ່ວ່າຄົນທີ່ເລີ່ມເຮັດວຽກໃໝ່ໆ ຫຼື ຄົນທີ່ເຮັດວຽກມາເປັນສິບໆປີ. ບາງຄົນອາດຈະບໍ່ຮູ້ຕົວເລີຍວ່າຕົນເອງ ກຳລັງປະເຊີນກັບອາການເຄັ່ງຕຶງທີ່ກຳລັງເກີດຂຶ້ນກັບຕົນເອງວິທີການຫຼີກລ່ຽງອາການຄຽດທີ່ງ່າຍທີ່ສຸດ ຄື: ຮູ້ຈັກຜ່ອນຄາຍກັບໜ້າທີ່ຂອງຕົນເອງ, ການປະວາງວຽກຂອງຕົນເອງ ແລ້ວອອກໄປຍ່າງປະມານ 10 ນາທີ ເຊິ່ງເປັນການຜ່ອນຄາຍອີກວິທີໜຶ່ງ.

**6. ຄວາມດັນເລືອດສູງ**

ໂຣກນີ້ ເປັນໄພງຽບທີ່ບໍ່ສະແດງອາການ ແລະ ມັກພົບກັບຜູ້ທີ່ມີອາຍຸ 40 ປີຂຶ້ນໄປ. ໂຣກນີ້ເກີດຈາກປັດໄຈບາງຢ່າງເຊັ່ນ: ໂຣກອ້ວນ, ຄວາມເຄັ່ງຕຶງ, ການຮັບປະທານອາຫານທີ່ມີລົດເຄັມ, ການສູບຢາ, ດື່ມເຫຼົ້າ ຫຼື ຜູ້ທີ່ເຮັດວຽກນັ່ງໂຕະໃນສຳນັກງານ ກໍມີຄວາມສ່ຽງສູງກວ່າຜູ້ທີ່ເຮັດວຽກທີ່ໃຊ້ກຳລັງ. ໂຣກຄວາມດັນເລືອດສູງບໍ່ພຽງແຕ່ເລື່ອງຄວາມດັນ ແຕ່ຍັງອາດນຳໄປສູ່ໂຣກເສັ້ນເລືອດໃນສະໝອງແຕກ, ອຳມະພຶກ, ອຳມະພາດ, ໄຕວາຍ, ພິການ ແລະ ຫົວໃຈວາຍ ໄດ້ອີກດ້ວຍ.



**7. ໂຣກອ້ວນ**

ຈາກການວິໄຈທາງການແພດຫຼ້າສຸດພົບວ່າ ໂຣກອ້ວນແຜ່ຫຼາຍກັບຄົນໄວເຮັດວຽກ. ຜູ້ຍິງສາມາດເປັນໂຣກອ້ວນໄດ້ງ່າຍກວ່າຜູ້ຊາຍ; ໂຣກອ້ວນຍັງເປັນບໍ່ເກີດຂອງໂຣກອື່ນໆອີກ ເຊັ່ນ: ໂຣກເບົາຫວານ, ໂຣກຫົວໃຈ, ໄຂມັນໃນຫຼອດເລືອດສູງ ແລະ ຄວາມດັນເລືອດສູງ; ຜູ້ທີ່ເປັນໂຣກອ້ວນຄວນເອົາໃຈໃສ່ເລື່ອງອາຫານການກິນເປັນພິເສດ, ຄວນປຶກສາເລື່ອງໂພຊະນາການ ແລະ ຄວນຫາເວລາອອກກຳລັງກາຍຢ່າງສະໝ່ຳສະເໝີ.

**8. ກົດໄຫຼຍ້ອນກັບ**

ໂຣກນີ້ມັກເກີດຂຶ້ນກັບຄົນທີ່ກິນອາຫານບໍ່ເປັນເວລາ ຄົນທີ່ບໍ່ມີເວລາ, ຟ້າວຟັ່ງຈົນຫຍໍ້າອາຫານບໍ່ລະອຽດ. ຄົນທີ່ມີອາການເຄັ່ງຕຶງຮຸນແຮງຈົນອາຫານບໍ່ຍ່ອຍ ແລະ ຄົນທີ່ສູບຢາ ແລະ ດື່ມເຫຼົ້າຫຼາຍມັກສ່ຽງກັບການເປັນໂຣກກົດໄຫຼຍ້ອນກັບ. ຜູ້ປ່ວຍທີ່ເປັນໂຣກນີ້ ເປັນເວລາ 10 ປີ ອາດນຳໄປສູ່ການເກີດໂຣກມະເຮັງຫຼອດອາຫານສ່ວນປາຍໄດ້ອີກດ້ວຍ.

**9. ປວດຫຼັງເປັນເວລາຍາວນານ**

ການໃຊ້ຊີວິດຢູ່ໜ້າຈໍຄອມພິວເຕີມື້ລະ 8 ຊົ່ວໂມງ ຫຼື ຫຼາຍກວ່ານັ້ນ, ຕະຫຼອດຈົນໃສ່ເກີບສົ້ນສູງເລື້ອຍໆ ອາດເປັນສາເຫດສຳຄັນຂອງອາການປວດຄໍ, ປວດບາໄຫຼ່, ປວດຫຼັງ, ປວດແຂນ-ຂາແລະສະໂພກ. ອາການປວດດັ່ງກ່າວແມ່ນເນື່ອງມາຈາກໂຣກກ່ຽວກັບກະດູກສັນຫຼັງ ຜູ້ທີ່ມີອາການປວດດັ່ງກ່າວຄວນໄປພົບແພດ ຫຼື ຜູ້ຊ່ຽວຊານສະເພາະໂຣກ ເພື່ອວິເຄາະອາການປວດ ແລະ ຮັກສາໃຫ້ຖືກຕ້ອງ.

**10. ປວດຫົວໄມເກຣນ**

ອາການປວດຫົວ (ໄມເກຣນ) ກໍເປັນໂຣກຊະນິດໜຶ່ງທີ່ມີຄົນປ່ວຍເປັນຈຳນວນຫຼາຍ ຜູ້ປ່ວຍຈະຮູ້ສຶກວ່າເມື່ອນັ່ງເຮັດວຽກທີ່ເຄັ່ງຄຽດ ຈະຮູ້ສຶກປວດບໍລິເວນຂະມັບດ້ານໜ້າຫົວ ຫຼື ດ້ານຫຼັງຕົ້ນຄໍ. ອາການປວດດັ່ງກ່າວຄືສັນຍານເຕືອນໃຫ້ຜູ້ປ່ວຍຮູ້ເຖິງສະພາບສ່ຽງຕໍ່ການເປັນໂຣກໄມເກຣນການພັກຜ່ອນບໍ່ພຽງພໍ, ແສງແດດກ້າ, ຄວາມຮ້ອນ ແລະ ອາການຂາດຮໍໂມນບາງຊະນິດ ກໍເປັນປັດໄຈກໍ່ໃຫ້ເກີດອາການປວດຫົວໄມເກຣນໄດ້ຄືກັນ.

ວົງການແພດ ມັກກວດພົບໂຣກ 10 ຊະນິດດັ່ງກ່າວຫຼາຍ ແລະ ໂຣກ 10 ຊະນິດນີ້ ມັກຄຸກຄາມຊີວິດຄົນໄວເຮັດວຽກເຖິງເວລາແລ້ວທີ່ພວກເຮົາຄວນໃຫ້ເວລາກັບຕົນເອງ ແລະ ກັບມາສຳຫຼວດຄວາມຜິດປົກກະຕິຂອງຮ່າງກາຍ ເພື່ອຈະໄດ້ຮູ້ວ່າຮ່າງກາຍກຳລັງສົ່ງສັນຍານເຕືອນໄພອັນໃດແດ່ກ່ອນທີ່ທຸກຢ່າງຈະຊ້າເກີນການແກ້ໄຂ.



## ທັກທາຍ ລະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

❄ **ກອງ**ປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ ໄດ້ສຳເລັດເສັດສິ້ນລົງໄປຢ່າງຈົບງາມ ເຊື່ອຕໍ່ໄປຈະໄດ້ຊຸບຊຽວກະກຽມດຳເນີນຕາມແຜນທີ່ວາງໄວ້ ແລະ ວຽກໃດປ່ຽນກ້າວ ລອງຊອມສ່ອງໄປນຳກັນ ວ່າບັນຫາໃດທີ່ສັງຄົມ ຍົກຍໍ່ສະເໜີແກ້ ແລະ ບັນຫາໃດຍັງຄາຄ້າງ ຍາວນານຮຽກຮ້ອງຊໍາເຮື້ອ ທັງເໜືອກາງ ແລະ ພາກໃຕ້ ຕິດຕາມພ້ອມພໍ່າກັນ.

❄ **ຊົມ**ເຊີຍກອງປະຊຸມໃຫຍ່ອົງຄະນະພັກ ຂອງບັນດາເມືອງຕ່າງໆ ໃນຂອບເຂດທົ່ວປະເທດ ທີ່ໄດ້ສຳເລັດລົງຢ່າງຈົບງາມ ມີຖະແຫຼງຂ່າວແຈ້ງ ບອກກ່າວເປັນທາງການ ລາຍງານຜົນສຳເລັດ ທີ່ອອກລາຍບັນກ້ອງ ປອງປະຊາແສນຊື່ນຊົມຍ້ອງຍໍ ຄະນະພັກຊຸດໃໝ່ ກຽມໄຕ່ຕາມສືບທອດໄດ້ ຕາມຄຳຊີ້ແນະບ່າ **ບັນແລ້ວ!**

## 🤗 ຊວນຍິ້ມ 🤗

# ແອ່ບຕຸ້ງ

### ເລື່ອງ: ຊອດເງິນ

ຊາຍໜຸ່ມຄົນໜຶ່ງ ເຮັດວຽກຢູ່ບໍ່ຖ່ານຫີນ ກັບມາເຮືອນດ້ວຍສີໜ້າຕຶງຄຽດ, ຜູ້ເປັນເມຍຈຶ່ງຖາມຂຶ້ນວ່າ:

**ເມຍ:** ຜົວເອີຍ, ແມ່ນເຈົ້າເປັນຫຍັງບໍ່, ເກີດຫຍັງຂຶ້ນບໍ່?

ຜົວຕອບດ້ວຍສຽງສັ່ນເຄືອ ແລະ ມີນ້ຳຕາຄ່ເບົ້າວ່າ: ໝູ່ຢູ່ບ່ອນເຮັດວຽກລ້ອຍຕາຍໝົດ

**ເມຍ:** ວ້າວ! ແລ້ວເຈົ້າຄືລອດ

**ຜົວ:** ມື້ເຊົ້າຂ້ອຍເຈັບທ້ອງ, ເລີຍອອກໄປຫ້ອງນ້ຳ ຈາກນັ້ນບໍ່ລະເບີດ ພະນັກງານຕາຍໝົດ

**ເມຍ:** ແລ້ວບໍລິສັດກະເຈົ້າວ່າຈັ່ງໃດ

**ຜົວ:** ກະເຈົ້າຊົດເຊີຍໃຫ້ຄອບຄົວຜູ້ເສຍຊີວິດ ຄອບຄົວລະ 100 ລ້ານ

**ເມຍ:** ປັດໂທ້ເອີຍ!!! ກູຊອດເງິນ 100 ລ້ານ ເພາະມຶງເຈັບທ້ອງນີ້ໄດ໋

!!!!!!



## ຄະຕິເຕືອນໃຈ

# ດອກຫຍ້າ

ສອນຄົນດ້ວຍຄຳເວົ້າ ບໍ່ເທົ່າເຮັດໃຫ້ເຫັນ
ຄົນສອນຕ້ອງເຮັດເປັນ ໃຫ້ເຂົາເຫັນເປັນຄືເວົ້າ

ລັດຖະສະພາຕ່າງປະເທດ

# ສະພາຜູ້ແທນປະຊາຊົນຟີລິບປິນ ມີມະຕິຖອດຖອນຮອງປະທານາທິບໍດີ

(ABS-CBN) - ອະນາຄົດທາງການເມືອງຂອງຮອງຜູ້ນຳຟີລິບປິນ"ແຂວນຢູ່ເທິງເສັ້ນດ້າຍ" ເມື່ອສະພາຜູ້ແທນປະຊາຊົນອະນຸມັດການຖອດຖອນນາງ ແລະ ປັດຈຸບັນ ມະຕິດັ່ງກ່າວຢູ່ລະຫວ່າງລໍຖ້າການພິຈາລະນາຈາກສະພາສູງ.

ວັນພຸດທີ 5 ກຸມພາຜ່ານມາ, ສະພາຜູ້ແທນປະຊາຊົນຟີລິບປິນ ໄດ້ລົງຄະແນນ 215 ສຽງ ເຊິ່ງຫຼາຍກວ່າໜຶ່ງສ່ວນສາມຂອງສະມາຊິກທັງໝົດ 315 ທີ່ນັ່ງ ເພື່ອຮັບຮອງມະຕິຖອດຖອນຮອງປະທານາທິບໍດີ ຊາຣາ ດູເຕີເຕ (Sara Duterte). ຫຼັງຈາກນີ້, ມະຕິດັ່ງກ່າວຈະເຂົ້າສູ່ການອະພິປາຍ ແລະ ລົງຄະແນນສຽງໂດຍສະພາສູງ ເປັນລຳດັບຕໍ່ໄປ; ຖ້າຫາກໄດ້ຮັບສຽງສະໜັບສະໜູນຫຼາຍກວ່າ 2/3 ຂອງສະພາສູງທີ່ມີສະມາຊິກທັງໝົດ 24 ທີ່ນັ່ງ, ນາງ ດູເຕີເຕ ຈະຖືກປົດອອກຈາກຕຳແໜ່ງຢ່າງເປັນທາງການ.

ການເຄື່ອນໄຫວດັ່ງກ່າວຍິ່ງເນັ້ນຢ້ຳຄວາມຂັດແຍ້ງທາງການເມືອງລະຫວ່າງປະທານາທິບໍດີ ເຟີດິນານ ມາກອສ ຈູເນຍ (Ferdinand Marcos Jr.) ແລະ ດູເຕີເຕ ລູກສາວຂອງອະດີດປະທານາທິບໍດີໂຣດຣິໂກດູເຕີເຕ (Rodrigo Duterte) ເຊິ່ງແກ່ຍາວມາເປັນເວລາຫຼາຍເດືອນ ເລີ່ມຈາກທີ່ນາງ ດູເຕີເຕ ອອກມາວິຈານ"ຄວາມສາມາດ"ຂອງມາກອສ ຈູເນຍ ເມື່ອເດືອນພະຈິກປີຜ່ານມາ.

ນອກຈາກກໍລະນີກັບມາກອສ ຈູເນຍ, ດູເຕີເຕຍັງເປັນເປົ້າໝາຍຂອງການຮ້ອງຟ້ອງໂດຍຫຼາຍອີງການກ່ຽວກັບການນຳໃຊ້ງົບປະມານໂດຍບໍ່ຖືກຕ້ອງອີກດ້ວຍ.



# ຍີ່ປຸ່ນ ຈະປັບປຸງກົດໝາຍ ການປ້ອງກັນ ແລະ ບັນເທົາທຸກໄພພິບັດ



(Xinhua) - ເມື່ອວັນສຸກທີ 14 ກຸມພາຜ່ານມາ, ລັດຖະບານຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍສະບັບປັບປຸງໃໝ່ ແນໃສ່ຍົກລະດັບວຽກງານປ້ອງກັນ ແລະບັນເທົາທຸກຈາກໄພພິບັດ.

Jiji Press ສື່ທ້ອງຖິ່ນລາຍງານວ່າການປັບປຸງທີ່ໄດ້ສະເໜີນີ້ ລວມມີການສ້າງຕຳແໜ່ງລະດັບຮອງຄະນະລັດຖະມົນຕີ (sub-cabinet-level) ພາຍໃນຫ້ອງວ່າການຄະນະລັດຖະມົນຕີ ເພື່ອຄວບຄຸມດູແລນະໂຍບາຍຄຸ້ມຄອງໄພພິບັດ ແລະ ປັບປຸງການປະສານງານລະຫວ່າງລັດຖະບານສູນກາງ ກັບ ທ້ອງຖິ່ນ.

ນອກຈາກນີ້, ຈະມີການນຳລະບົບການລົງທະບຽນໃໝ່ສຳລັບອົງການຈັດຕັ້ງອາສາສະໝັກມາໃຊ້; ກຸ່ມເຫຼົ່ານີ້ຈະມີບົດບາດສຳຄັນໃນການຕອບໂຕ້ໄພພິບັດ ລວມທັງການດຳເນີນງານສູນອົບພະຍົບ.

ນອກນີ້, ລັດຖະບານທ້ອງຖິ່ນ ຍັງຈະຕ້ອງເປີດເຜີຍຕໍ່ສາທາລະນະຊົນເປັນປະຈຳທຸກປີກ່ຽວກັບການເກັບຮັກສາເຄື່ອງບັນເທົາທຸກທີ່ຈຳເປັນ ເຊັ່ນ: ອາຫານ, ຫ້ອງນ້ຳສຸກເສີນ ແລະ ຕຽງຊົ່ວຄາວ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ການກະກຽມຄວາມພ້ອມ.

# ສິງກະໂປ ປັບປຸງທະບຽນຜູ້ມີສິດເລືອກຕັ້ງ ໃຫ້ປະຊາຊົນກວດກາກ່ອນການເລືອກຕັ້ງທົ່ວໄປ

(Xinhua) - ກົມການເລືອກຕັ້ງສິງກະໂປ ປະກາດເມື່ອວັນສຸກທີ 14 ກຸມພາຜ່ານມາວ່າ, ໄດ້ສຳເລັດການປັບປຸງບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ໂດຍທະບຽນສະບັບປັບປຸງ ໄດ້ເປີດໃຫ້ປະຊາຊົນກວດກາ ນັບແຕ່ວັນເສົາທີ 15 ໄປຮອດວັນທີ 28 ກຸມພານີ້.

ທະບຽນສະບັບປັບປຸງນີ້ ລວມມີຊື່ຜູ້ມີສິດເລືອກຕັ້ງທັງໝົດຕັ້ງແຕ່ວັນທີ 1 ກຸມພາ, ພົນລະເມືອງສິງກະໂປສາມາດກວດລາຍລະອຽດສ່ວນຕົວຂອງຕົນທາງເອເລັກໂຕຣນິກ ຫຼືໄປທີ່ສູນບໍລິການທ້ອງຖິ່ນຫຼືສະຖານທູດຢູ່ຕ່າງປະເທດ ເພື່ອກວດເບິ່ງວ່າຂໍ້ມູນໃດມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງ ຫຼື ລຶບອອກຫຼືບໍ່.

ໃນເດືອນມັງກອນຜ່ານມາ, ນາຍົກລັດຖະມົນຕີ ລໍເຣນ ຫວອງ (Lawrence Wong) ໄດ້ສັ່ງການໃຫ້ເຈົ້າໜ້າທີ່ທະບຽນປັບປຸງທະບຽນເພື່ອໃຫ້ປະຊາຊົນກວດກາກ່ອນການເລືອກຕັ້ງທົ່ວໄປ. ນອກຈາກນີ້, ຍັງໄດ້ສ້າງຕັ້ງຄະນະກຳມະການກວດກາຄືນເຂດເລືອກຕັ້ງ ເຊິ່ງເປັນບາດກ້າວສຳຄັນໃນການກະກຽມຄວາມພ້ອມໃຫ້ແກ່ການເລືອກຕັ້ງທີ່ຈະມາເຖິງ; ຄະນະກຳມະການດັ່ງກ່າວ ຈະປະເມີນເຂດເລືອກຕັ້ງໃນປັດຈຸບັນ ແລະ ແນະນຳການປັບປ່ຽນເຂດເລືອກຕັ້ງ ໂດຍອີງໃສ່ບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຫຼ້າສຸດ.




# ມາເລເຊຍ ຈະຜ່ອນຄາຍກົດໝາຍ "ການປະທ້ວງໃນທີ່ສາທາລະນະ"



(AFP) - ລັດຖະບານມາເລເຊຍ ຕົກລົງທີ່ຈະຜ່ອນຄາຍກົດໝາຍວ່າດ້ວຍການປະທ້ວງໃນທີ່ສາທາລະນະ ລວມທັງຍົກເລີກຄວາມຈຳເປັນໃນການໄດ້ຮັບອະນຸຍາດກ່ອນຈັດການໂຮມຊຸມນຸມ.

ວັນພະຫັດທີ 13 ກຸມພານີ້, ທ່ານ ອັນວາ ອິບຣາຮິມ (Anwar Ibrahim) ນາຍົກລັດຖະມົນຕີມາເລເຊຍ ກ່າວຕໍ່ລັດຖະສະພາວ່າ: ລັດຖະບານຈະຍົກເລີກບົດບັນຍັດໃນກົດໝາຍການໂຮມຊຸມນຸມໂດຍສັນຕິ ທີ່ກຳນົດໃຫ້ຜູ້ຈັດການໂຮມຊຸມນຸມ ຕ້ອງໄດ້ຮັບການຍິນຍອມເຫັນດີກ່ອນທີ່ຈະຈັດກິດຈະກຳການໂຮມຊຸມນຸມ.

ຕຳຫຼວດມາເລເຊຍ ມັກໃຊ້ກົດລະບຽບດັ່ງກ່າວ ເປັນເຫດຜົນໃນການປ້ອງກັນບໍ່ໃຫ້ມີການໂຮມຊຸມນຸມ ໂດຍກ່າວວ່າ ຖ້າເຈົ້າຂອງຊັບສິນຢູ່ເຂດດັ່ງກ່າວບໍ່ໃຫ້ການອະນຸຍາດ, ກໍຈະບໍ່ສາມາດຈັດການໂຮມຊຸມນຸມໄດ້.

ແນວໃດກໍດີ, ທ່ານ ອັນວາ ເຊິ່ງເຄີຍເປັນຜູ້ໂຮມຊຸມນຸມມາກ່ອນ ກ່າວວ່າ ປະຊາຊົນສາມາດຈັດການໂຮມຊຸມນຸມໂດຍບໍ່ຕ້ອງຂໍອະນຸຍາດອີກຕໍ່ໄປ, ແຕ່ພວກເຂົາຈຳເປັນຕ້ອງແຈ້ງໃຫ້ຕຳຫຼວດຊາບລ່ວງໜ້າ 5 ວັນ ເພື່ອຊ່ວຍເຈົ້າໜ້າທີ່ສາມາດຈັດການຮັກສາຄວາມປອດໄພ, ການຄວບຄຸມຝູງຊົນ ແລະ ການຈະລາຈອນໄດ້. ທ່ານກ່າວຕື່ມວ່າ "ສຳລັບສະຖານທີ່ໂຮມຊຸມນຸມຈະມີຄວາມຍືດຫຍຸ່ນຫຼາຍຂຶ້ນ, ຍົກເວັ້ນສະຖານທີ່ດັ່ງກ່າວ ຖືວ່າເປັນຈຸດອ່ອນໄຫວດ້ານຄວາມໝັ້ນຄົງ".

ເຖິງແນວໃດກໍຕາມ, ມາເລເຊຍ ຍັງຫ້າມການໂຮມຊຸມນຸມທີ່ມີອາວຸດ ຫຼື ເດັກນ້ອຍລວມຢູ່ນຳ.

# ລັດຖະສະພາຝຣັ່ງ ລົງຄະແນນສຽງ ຫ້າມຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ




(AFP) - ລັດຖະສະພາຝຣັ່ງ ໄດ້ລົງຄະແນນສຽງຫ້າມຢາສູບໄຟຟ້າແບບໃຊ້ຄັ້ງດຽວຖິ້ມ ໂດຍໃຫ້ເຫດຜົນວ່າ ມັນເປັນຊ່ອງທາງສູ່ການເສບຕິດຢາສູບຂອງໄວໜຸ່ມ ແລະ ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

ຮ່າງກົດໝາຍດັ່ງກ່າວໄດ້ຮັບການຮັບຮອງດ້ວຍການລົງຄະແນນສຽງຄັ້ງສຸດທ້າຍໃນສະພາສູງ ເມື່ອວັນພະຫັດທີ 13 ກຸມພາຜ່ານມາ, ເຮັດໃຫ້ຝຣັ່ງເປັນປະເທດທີສອງໃນສະຫະພາບເອີຣົບ ຖັດຈາກແບນຊິກ ທີ່ອອກກົດໝາຍຫ້າມຢາສູບໄຟຟ້າ.

ຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ຫຼືທີ່ເອີ້ນກັນວ່າ "ພັຟ" (puff) ໄດ້ຮັບຄວາມນິຍົມຢ່າງສູງໃນກຸ່ມຄົນໜຸ່ມສາວຊາວຝຣັ່ງ ເຊິ່ງມັນມີປະລິມານສານນິໂຄຕິນສູງ, ມີລາຄາຖືກ ແລະ ມີຫຼາຍລົດຊາດເຊັ່ນ: ໝາກແອັບເປີ້ນ, ໝາກໂມ ແລະ ຊັອກໂກແລັດ.

ຮ່າງກົດໝາຍດັ່ງກ່າວທີ່ໄດ້ຮັບການຮັບຮອງຈາກສະພາແຫ່ງຊາດໜຶ່ງອາທິດກ່ອນໜ້ານີ້ ຫ້າມການຂາຍ ແລະ ຈຳໜ່າຍຢາສູບໄຟຟ້າແບບໃຊ້ແລ້ວຖິ້ມໃນປະເທດຝຣັ່ງ ບໍ່ວ່າມັນຈະມີໝໍ້ໄຟ (ແບດເຕີຣີ) ທີ່ສາມາດສາກໄຟໄດ້ ຫຼືບໍ່ກໍຕາມ.

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍຄືນິຕິກຳທີ່ຈະວາງອອກໃນຕໍ່ໜ້າໃຫ້ຮັບປະກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່;ການປັບປຸງລັດຖະທຳມະນູນຄັ້ງນີ້ ຕົ້ນຕໍແມ່ນສຸມໃສ່ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼືຮອງຮັບແນວທາງການເມືອງຂອງພັກ ແລະ ແນວທາງການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່ ກໍຄືແນວທາງປ່ຽນແປງໃໝ່ໃນຊຸມປີຕໍ່ໜ້າ ໂດຍສະເພາະໃນສະໄໝທີ XII ຂອງພັກ, ຫາກບໍ່ແມ່ນການປັບປຸງທັງໝົດເນື້ອໃນຂອງລັດຖະທຳມະນູນ; ການປັບປຸງລັດຖະທຳມະນູນ ຕ້ອງມີເນື້ອໃນສອດຄ່ອງກັບບັນດາເນື້ອໃນຂອງໂຄງການການເມືອງຂອງພັກ ສະບັບທີ 3, ຮ່າງລາຍງານການເມືອງທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່



ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ ໂດຍສະເພາະບັນຫາບົດບາດພັກເປັນແກນນຳ, ບັນຫາຈຸດໝາຍສັງຄົມນິຍົມ, ບັນຫາເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ບັນຫາການແບ່ງຂັ້ນຄຸ້ມຄອງ, ການກຳນົດຊື່ເອີ້ນຕ່າງໆຕ້ອງປັບປຸງໄປລວງດຽວກັນ.

ລັດຖະທຳມະນູນສະບັບປີ 2015 ປະກອບດ້ວຍ 14 ໝວດ, 119 ມາດຕາ; ສຳລັບຮ່າງລັດຖະທຳມະນູນ (ສະບັບປັບປຸງ) ປີ 2025 ປະກອບດ້ວຍ 14 ໝວດ, 122 ມາດຕາ ໃນນີ້, ໄດ້ປັບປຸງ 48 ມາດຕາ, ເພີ່ມໃໝ່ 5 ມາດຕາ ແລະ ຮັກສາເນື້ອໃນໄວ້ຄືເກົ່າ 69 ມາດຕາ.

ໃນກອງປະຊຸມ, ໄດ້ຮັບຟັງບົດສັງລວມຄຳເຫັນຂອງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ໃນການທາບທາມຮ່າງລັດຖະທຳມະນູນສະບັບປັບປຸງປີ 2025 ຢູ່ 7 ຈຸດໃນຂອບເຂດທົ່ວປະເທດ, ຮ່າງລັດຖະທຳມະນູນ ສະບັບປັບປຸງປີ2025, ຮ່າງບົດລາຍງານຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ກ່ຽວກັບການປັບປຸງລັດຖະທຳມະນູນຕໍ່ກອງປະຊຸມກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນຕໍ່ແຕ່ລະມາດຕາຂອງຮ່າງລັດຖະທຳມະນູນສະບັບປັບປຸງ ຢ່າງມີຈຸດສຸມ, ມີເຫດມີຜົນ ເພື່ອເຮັດໃຫ້ຮ່າງລັດຖະທຳມະນູນສະບັບດັ່ງກ່າວມີເນື້ອໃນສອດຄ່ອງ, ຄົບຖ້ວນສົມບູນ ແລະ ເກີດປະໂຫຍດສູງສຸດຕໍ່ວົງຄະນາຍາດແຫ່ງຊາດກໍຄືປະຊາຊົນລາວບັນດາເຜົ່າ.



## ຄະນະ...

(ຕໍ່ຈາກໜ້າ 1)

ກຳມາທິການ, ພະນັກງານຫຼັກແຫຼ່ງຂອງ ສພຊ. ຫຼັງຈາກນັ້ນ, ບັນດາສະຫາຍໃນຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ມີການດຳເນີນຊີວິດການເມືອງ ເພື່ອຕີລາຄາຄືນການນຳພາຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ຕະຫຼອດປີ 2024 ທີ່ຜ່ານມາ.

ຕອນບ່າຍວັນທີ13ກຸມພາ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຈັດການເຜີຍແຜ່ເຊື່ອມຊຶມມະຕິ ຄັ້ງທີ 9 ສະໄໝທີ XI ຂອງຄະນະບໍລິຫານງານສູນກາງພັກ ໂດຍແມ່ນສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ຕາງໜ້າຄະນະບໍລິຫານງານພັກ ຂຶ້ນເຜີຍແຜ່ມະຕິດັ່ງກ່າວ. ຫຼັງຈາກນັ້ນ ໄດ້ມີການຜ່ານມະຕິແຕ່ງຕັ້ງຕຳແໜ່ງການນຳຂັ້ນສູງ ແລະ ປະກາດແຕ່ງຕັ້ງຕຳແໜ່ງບໍລິຫານປະເພດ 3, 4 ແລະ 5 ຢູ່ພາຍໃນ ສພຊ ໂດຍມີບັນດາສະຫາຍກຳມະການປະຈຳ ແລະ ກຳມະການໃນຄະນະບໍລິຫານງານພັກ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ຄະນະໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນທົ່ວ ສພຊ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນໂອກາດດຳເນີນກອງປະຊຸມຄັ້ງນີ້, ສະຫາຍ ປອ. ໄຊສົມພອນ ພົມວິຫານ ໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ເນັ້ນໜັກໃຫ້:

- ສືບຕໍ່ເອົາໃຈໃສ່ວຽກງານການນຳພາດ້ານການເມືອງ-ແນວຄິດໃຫ້ຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ ຢ່າງປົກກະຕິ;

- ສືບຕໍ່ການປັບປຸງກົງຈັກຂອງສະພາແຫ່ງຊາດ ເພື່ອຮອງຮັບການປະຕິບັດໜ້າທີ່ພາຍໃນສະພາແຫ່ງຊາດກໍຄືການກະກຽມໃຫ້ແກ່ການເລືອກຕັ້ງສະພາແຫ່ງຊາດ ຊຸດທີ X ທີ່ຈະມາເຖິງນີ້;

-ຖືສຳຄັນການປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບຢ່າງເຄັ່ງຄັດ, ມີກົນໄກປະສານງານທີ່ໂລ່ງລ່ຽນກັບບັນດາຂະແໜງການຂອງລັດຖະບານ ເພື່ອສ້າງຄວາມເປັນເອກະພາບໃນການຕົກລົງບັນຫາສຳຄັນຂອງຊາດ; ເພີ່ມທະວີການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນຂອງອົງຄະນະພັກສະພາແຫ່ງຊາດ ສະໄໝທີ IV ແລະ ແຜນພັດທະນາສະພາແຫ່ງຊາດ ເຊິ່ງປະກອບມີ 5 ແຜນງານ, 29 ໂຄງການ ຕິດພັນກັບມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ;

- ເອົາໃຈໃສ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກ ຕໍ່ການເຄື່ອນໄຫວວຽກງານຂອງ 3 ອົງການຈັດຕັ້ງມະຫາຊົນສະພາແຫ່ງຊາດ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ອົງການດັ່ງກ່າວ ເຄື່ອນໄຫວຖືກຕ້ອງຕາມພາລະບົດບາດ ເພື່ອເພີ່ມທະວີຄວາມສາມັກຄີອ້ອມຂ້າງພັກ;

-ເພີ່ມທະວີການນຳພາ-ຊີ້ນຳຂອງພັກ ຕໍ່ການປະຕິບັດໜ້າທີ່ການເມືອງ ກໍຄືການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍສຸມໃສ່ການກະກຽມບັນດາຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຢູ່ກອງປະຊຸມສະໄໝວິສາມັນເທື່ອທີ 2, ສະໄໝສາມັນເທື່ອທີ 9 ແລະ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີIX;

- ຄົ້ນຄວ້າປັບປຸງລັດຖະທຳມະນູນ ສະບັບປີ 2015 ເພື່ອໃຫ້ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງໃນຕໍ່ໜ້າ;

- ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ໃຫ້ທັນເວລາ, ຖືກຕ້ອງຕາມກົດໝາຍ, ຖືກຕາມຄວາມເປັນຈິງ ແລະ ຍຸຕິທຳ;

- ປີ 2025 ເປັນປີສຸດທ້າຍຂອງອາຍຸການສະພາແຫ່ງຊາດ ຊຸດທີIX, ສະພາແຫ່ງຊາດຈະຕ້ອງໄດ້ເອົາໃຈໃສ່ໃນການກະກຽມແລະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III ໃຫ້ສຳເລັດຕາມແຜນການ, ສິ່ງສຳຄັນແມ່ນການເລືອກຕັ້ງໃຫ້ໄດ້ບຸກຄະລາກອນທີ່ມີເງື່ອນໄຂຄົບຖ້ວນຕາມກົດໝາຍກຳນົດ, ຮັບປະກັນບຸຄະລາກອນ 3 ຮຸ່ນ ຄື: ຮຸ່ນໜຸ່ມ, ຮຸ່ນກາງ ແລະ ຮຸ່ນອາວຸໂສ; ຮັບປະກັນດ້ານເພດ, ເຜົ່າ ຈຶ່ງຈະຮັບປະກັນການປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນບັນດາເຜົ່າຢ່າງກວ້າງຂວາງ ແລະ ທົ່ວເຖິງ;

-ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ກົນໄກສະຫຼຸບລາຍງານຕາມກົດລະບຽບຂອງພັກ ໂດຍສະເພາະແມ່ນລະບອບປະຊຸມຂອງຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະປະຈຳພັກ, ລະບົບສ່ອງແສງຂອງບັນດາຮາກຖານພັກ, ວຽກງານກວດກາພັກ-ລັດ ເພື່ອແກ້ໄຂປາກົດການຫຍໍ້ທໍ້ໃນຖັນແຖວສະມາຊິກພັກ, ສ້າງໃຫ້ມີກົນໄກປະຊຸມເປີດກວ້າງປະຈຳປີຂອງຄະນະບໍລິຫານງານພັກສະພາແຫ່ງຊາດ ຕາມກົດລະບຽບພັກ.

**(ນາງ ອາລິນ ສຸພົມມະປະດິດ)**



ເຝົ້າໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ຄຳເຫັນສ່ວນໜຶ່ງ ເພື່ອປີທ່ອງທ່ຽວລາວຄັ້ງຕໍ່ໄປ

ເນື່ອງຈາກປີທ່ອງທ່ຽວລາວ (2024) ຫາກໍສຳເລັດລົງໃໝ່ໆໝາດໆ ດ້ວຍຜົນສຳເລັດຫຼາຍກວ່າຄັ້ງຜ່ານມາ, ຜູ້ຂຽນຈຶ່ງຍັງຂໍສືບຕໍ່ສົນທະນາມາເລົ່າເລື່ອງການທ່ອງທ່ຽວຢູ່ບ້ານເພິ່ນເມືອງທ່ານ ເພື່ອເປັນບົດຮຽນແຮໄວ້ສຳລັບປີທ່ອງທ່ຽວລາວຊຸດໜ້າ. ມື້ນີ້ ເລີ່ມຈາກຂ່າວ**ສະຫຼຸບການທ່ອງທ່ຽວໄທ ໃນປີ 2024** ທີ່ອົງການທ່ອງທ່ຽວໄທ (TAT) ໄດ້ອ້າງເປັນໂຕເລກໂຕຜາວ່າ ຕະຫຼອດປີ 2024 ປະເທດໄທ ໄດ້ຕ້ອນຮັບນັກທ່ອງທ່ຽວຕ່າງປະເທດ ຈຳນວນ 32.02 ລ້ານຄົນ, ສ້າງລາຍຮັບໄດ້ 1.50 ພັນຕື້ບາດ; ຜົນສຳເລັດຂອງອຸດສາຫະກຳທ່ອງທ່ຽວໄທຄັ້ງນີ້ ຈະໄດ້ຮັບການຕໍ່ຍອດດ້ວຍການປະກາດໃຫ້ປີ 2025 ນີ້ ເປັນປີທ່ອງທ່ຽວ ອະເມຊິ່ງໄທແລນມະຫະກຳກິລາ ໂດຍໄດ້ຄາດຄະເນວ່າ ຈະມີນັກທ່ອງທ່ຽວເຂົ້າໄປທ່ຽວໄລຍະສັ້ນໆ 29 ລ້ານຄົນ ແລະ ໄລຍະຍາວ 11 ລ້ານຄົນ ເພີ່ມຂຶ້ນ 7.5%, ສ່ວນລາຍຮັບຈາກການທ່ອງທ່ຽວນັ້ນ ຄາດວ່າຈະບັນລຸໄດ້ 2.9 ພັນຕື້ບາດ. ປີທ່ອງທ່ຽວ ອະເມຊິ່ງໄທແລນ ແລະ ມະຫະກຳກິລາ 2025 ມີເງື່ອນໄຂສິ່ງແວດລ້ອມທີ່ເອື້ອອຳນວຍທີ່ສຸດ ເພາະປະເທດໄທຈະໄດ້ເປັນເຈົ້າພາບມະຫະກຳກິລາອາຊຽນ ໃນລະຫວ່າງວັນທີ 9-20 ທັນວາປີນີ້; ນອກຈາກມະຫະກຳກິລາອາຊຽນແລ້ວ, ທາງການໄທ ຍັງຈະຈັດມະຫະກຳກິລາບານສົ່ງລະດັບໂລກ ລະຫວ່າງວັນທີ 22 ສິງຫາ ຫາ ວັນທີ 7 ກັນຍາ 2025 ເພື່ອເຮັດໃຫ້ປີ 2025 ກາຍເປັນໂອກາດຄຳສຳລັບອຸດສາຫະກຳທ່ອງທ່ຽວໄທ. ທາງ TAT ຈະໄດ້ເພີ່ມປັດໄຈກະຕຸ້ນຕ່າງໆເຊັ່ນ: ລາຍການເຄື່ອນໄຫວທີ່ຫຼາກຫຼາຍ, ເປີດກວ້າງເສັ້ນທາງທ່ອງທ່ຽວ, ໃຫ້ບໍລິການຊື້-ຂາຍ (ຊັອບປິງ) ພິເສດແລະຈະມີການເຊື້ອເຊີນເຫຼົ່າດາລາ-ນັກສະແດງ, ບຸກຄົນດີເດັ່ນມີຊື່ສຽງລະດັບໂລກເຂົ້າຮ່ວມ ເພື່ອໃຫ້ບັນດານັກທ່ອງທ່ຽວໄດ້ເຫັນ ໄດ້ພົບປະແບບໂຕເປັນໆ; ບໍ່ພຽງແຕ່ເທົ່ານັ້ນ, ທາງ TAT ຍັງຈະຂໍຮ້ອງໃຫ້ສາຍການບິນຈີນ ແລະ ອິນເດຍ ເພີ່ມຖ້ຽວບິນເຂົ້າໄທ. ຈີນ ແລະ ອິນເດຍ ແມ່ນຕະຫຼາດການທ່ອງທ່ຽວທີ່ໃຫຍ່ທີ່ສຸດສຳລັບໄທ; ສະຖິຕິທາງການໄທໃຫ້ຮູ້ວ່າ 5 ປະເທດທີ່ປ້ອນນັກທ່ອງທ່ຽວໃຫ້ໄທຫຼາຍທີ່ສຸດໃນປີຜ່ານມານັ້ນໄດ້ແກ່: ຈີນ 6.21 ລ້ານຄົນ, ມາເລເຊຍ 4.50 ລ້ານຄົນ, ອິນເດຍ 1.91 ລ້ານຄົນ, ສ.ເກົາຫຼີ 1.68 ລ້ານຄົນ ແລະ ລັດເຊຍ 1.50 ລ້ານຄົນ.

ປີທ່ອງທ່ຽວລາວ 2024 ຈັດຂຶ້ນໃນໂອກາດທີ່ພວກເຮົາເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ແລະ ບັນດາກອງປະຊຸມປິ່ນອ້ອມ, ນີ້ຖືວ່າໄປຖືກກະແສແລ້ວ. ແຕ່ຕາມທັດສະນະສ່ວນຕົວ ເຫັນວ່າມັນບໍ່ກວ້າງຂວາງເທົ່າກັບປີທີ່ມີເຫດການກິລາ ຫຼື ເທສະການທີ່ມີລັກສະນະມະຫາຊົນລະດັບພາກພື້ນ ແລະ ສາກົນ, ເພາະກອງປະຊຸມສຸດຍອດອາຊຽນເປັນເຫດການທາງການເມືອງ ເຊິ່ງມີຜູ້ນຳຫຼາຍສິບປະເທດເຂົ້າຮ່ວມ; ສະນັ້ນ ຄວາມປອດໄພ, ຄວາມສະຫງົບ ຈຶ່ງເປັນວຽກບຸລິມະສິດຂອງປະເທດເຈົ້າພາບ. ໃນຕໍ່ໜ້າ ຖ້າເປັນໄປໄດ້ ຄວນມີການວາງໄວ້ແຕ່ເນີ້ນໆ ເພື່ອເປີດປີທ່ອງທ່ຽວລາວອີກ ໃນໂອກາດພວກເຮົາຈະເປັນເຈົ້າພາບກິລາອາຊຽນໃນຕໍ່ໜ້າ ເຊິ່ງໃກ້ຈະຮອດຮອບວຽນແລ້ວ, ຖ້າພວກເຮົາມີເງື່ອນໄຂຮັບໄດ້ໃນປີນັ້ນ ກໍຄວນຈັດໃຫ້ມີເທສະການສະຖານມໍລະດົກໂລກຂອງລາວ ຫຼື ບຸນກິລາພື້ນເມືອງ ແລະ ອື່ນໆ ໃຫ້ມີສີສັນເພີ່ມຕື່ມ.









# ອ້າຍບໍ່ຮູ້ລາວ

*# ບ່າວກະບື*

**ນາງ**ບົວແພງ ບອກຜົວວ່າ: "ທີ່ຮັກ, ຄູ່ຜົວເມຍທີ່ຫາກໍ່ຍ້າຍມາຢູ່ຫ້ອງຕິດກັບພວກເຮົານັ້ນ ຈັ່ງແມ່ນຄະນອມຫອມຮັກກັນແທ້ໆ. ແຕ່ລະເຊົ້າ ເມື່ອຈະອອກຈາກເຮືອນ, ຝ່າຍຜົວຈູບລາເມຍທຸກຄັ້ງ ແລະ ທຸກໆແລງ ເວລາເຂົາກັບມາເຮືອນ, ເຂົາກໍ່ມີດອກກຸຫຼາບຈຳນວນໂຫຼຕິດໄມ້ຕິດມືມາໃຫ້ເມຍ. ແລ້ວ, ເປັນຫຍັງອ້າຍບໍ່ເຮັດຄືເຂົາແດ່?".

ຝ່າຍຜົວຕອບວ່າ: "ອີກໂກຍ! ເປັນຫຍັງຊິໃຫ້ອ້າຍເຮັດແນວນັ້ນ, ອ້າຍຍັງບໍ່ທັນຮູ້ນາງດີເທື່ອ".

# I Don't Know Her

*# BAOKBU*

Mr Buapheng tells her husband, "Dear, that young couple that just moved in next door seem such a loving two some. Every morning, when the husband leaves the house, he kisses the wife goodbye, and every evening whe he comes home, he brings her a dozen roses. Now, why can't you do that?"

"Gosh" said the husband, why? "I hardly know the woman."

ຕາມພາສາ ກາຕູນ




**1. ວ່າດ້ວຍທາງຮ່ວມບ້ານ ແຕ່ກ່ອນລົດ 10 ລໍ້ແລ່ນສວນກັນສະບາຍ, ແຕ່ດຽວນີ້ ລົດລໍ້ໂບໝື້ນເຂົ້າຍັງລຳບາກ, ໃນຕາດິນພວກຕິດທາງຍ່າງ ອອກທາງທຸກປີ.**

**2. ໃນຕາດິນມັນຍ່າງບໍ່ໄດ້ດອກ, ພວກດິນຕິດທາງທັ້ນ ໂລບຫຍັບເອົາດິນທາງລວມ.**

● ໂດຍ : ພູຜາ

ຜູ້ຊີ້ນຳ
ທ່ານ ສົງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກິກ ບຸດດາໄຊ